# ລວມຄຳກອນ

ໂດຍ: ໄທ ທີຣະວົງ

# ສາລະບານ

- ເພື່ອນເຂົາ........................................ ໑
- ເພື່ອນເຮົາ. ........................................ ໔
- ສຽງແຄນບ້ານເຮົາ ........................................ ๓
- ເຂົ້າໜຽວ ........................................ ໕
- ຣິດສິບສອງ ........................................ ໗
- ຜິວແກ້ວ, ເມັຽຂວັນ ........................................ ໑໔
- ຄະຕິທັມ ........................................ ໑໕
- ບຸນຄຸນພໍ່ແມ່ ........................................ ໑໗
- ສຸພາບຊົນ .......... ........................................ ໒໐
- ປັນຍາຊົນ ........................................ ໒໑
- ສວັນໃນອົກ, ນາຣົກໃນໃຈ ........................................ ໒໒
- ຈິດເປັນນາຍກາຍເປັນບ່າວ ........................................ ໒໔
- ມາເຢີ ຂວັນເອີຍ ........................................ ໒໗
- ມັດຊິມາປະຕິປະທາ "ທາງສາຍກາງ" ........ ໓໓
- ມຸງຄຸນຊີວິດ ๓๙ ........................................ ໓໙
- ມຸງຄຸນຊີວິດ, ມານຊີວິດ ........................................ ໔໐
- ທົສຣາຊທັມ........................................ ໔໑
- ພໍ່ແມ່ກະຕັນຍູ, ລູກກະຕະເວທີ ........................................ ໔໒
- ຄູ່ຊີວິດ........................................ ໔໓
- ສັງຄົມ........................................ ໔໔
- ຄວາມຮັກແພງ........................................ ໔໕
- ກໍ່ອູ - ມໍ່ອື່ງ........................................ ໔໖
- ສິ່ງທ້າຍປີເກົ່າ........................................ ໔໗
- ພອນປີໃໝ່........................................ ໔໙

# ເພື່ອນເຂົາ

ຜູ່ທີ່ປອກລອກນັ້ນ ຄິດໄດ້ແຕ່ທາງດຽວ
ຖ້າຫາກຈຳເປັນເສັຽ ກໍແຕ່ພໍພຽງນ້ອຍ
ໄພມາເຖິງໂຕແລ້ວ ວິນວາຍແລ່ນຫາໝູ່
ຄົບໝູ່ແຕ່ລະຄັ້ງ ຫວັງໄດ້ຢ່າງດຽວ

ຜູ່ທີ່ດີແຕ່ເວົ້າ ຍົກເຣື່ອງເກົ່າມາຄູຍ
ອ້າງແຕ່ແນວບໍ່ທັນມີ ນອກຕົວມາເວົ້າ
ສິງເຄາະຄົນຂົນໃຫ້ ຂອງແນວໄຮ້ປໂຍດ
ໝູ່ຂໍເພິ່ງແຕ່ລະຄັ້ງ ງໍແງ້ນແລ່ນໜີ

ຜູ່ປະຈົບປະແຈງນັ້ນ ຊິເຮັດຊົ່ວກໍລອຍຕາມ
ຍາມເຮັດດີກໍຊົມເຊີຍ ຄ່ອງຄືຄວນແທ້ ຕໍ່ໜ້າ
ຕິຍໍຍ້ອງ ສັນລະເສີນອ້ອຍອິ່ນ
ລັບຫລັງກັບຕ່າວປີ້ນ ນິນທາພ້ອມຫຸ່ມຂວັນ

ຜູ່ທີ່ຈິບຫາຍນັ້ນ ຊວນຕິດສິ່ງມຶນເມົາ
ກັຽວກ່ອມຄົນໃຈເບົາ ໃຫ້ຫລົ່ມຫລົງໃນຫລິ້ນ
ລໍ້ຫລອກລວງໄປກົ້ວ ການພະນັນໄພ້ຖົ່ວ
ຊວນສໍ້ໂກງໂລບລ້ຽວ ຂະໂມຍປຸ້ນໝູ່ປະຊາ.

# ເພື່ອນເຮົາ

ຜູ່ອຸປະກາຣະນັ້ນ    ປ້ອງກັນ ເມື່ອຖືກນິນທາ
ທັງພ່ຳພຣູນແພງຮັກສາ    ຊັບສິນເຮົາໃຫ້
ຍາມເມື່ອໂພຍໄພຮ້າຍ    ມາເຖິງພໍໄດ້ເພິ່ງ
ມິທຸຣະບາງເລັກນ້ອຍ    ຄອຍຊ່ວ້ານຊ່ອຍຊູ

ຜູ່ຮ່ວມສຸກຮ່ວມທຸກນັ້ນ    ບໍ່ບັງບໍ່ຮຽງອຳອຽງ
ທັງບໍ່ຂາຍຄວາມລັບ    ຊື່ງກັນແລະກັນຊ້ຳ
ຍາມວິບັດບໍ່ເຄີຍຖິ້ມ    ໜີໄປໄກຈາກ
ຄາວລຳບາກຍາກແຄ້ນ    ກໍຂັນສູ້ຊ່ວຍແທນ

ຜູ່ແນະນຳປໂຍດນັ້ນ    ຫ້າມເຮັດສິ່ງເລວຊາມ
ທັງແນະນຳຄວາມດີ    ທີ່ເຮົາຄວນຮູ້
ຕັກເຕືອນເຮົາໃຫ້ເຫັນແຈ້ງ    ໃນບຸນແລະບາບ
ສອນສັ່ງຊີ້ບອກເສັ້ນ    ທາງຊິໄດ້ຢູ່ສະບາຍ

ຜູ່ທີ່ຮັກໄຄ່ນັ້ນ    ທຸກກໍທຸກນຳກັນ
ຍາມໃດມີສຸກສັນ    ກໍຮ່ວມກັນສນຸກລື້ນ
ໂຕ້ຖຽງຄືນຜູ່ມາເຍີ້ຍ    ທານຂວັນຫຍັນຍໍ່
ຍ້ອງຍໍຜູ່ຮັບຮູ້    ບຸນຄຸນໄດ້ຈາກເຮົາ.

# ສຽງແຄນບ້ານເຮົາ

ຄິດເຫັນຕອນຢູ່ບ້ານ ສະຖານຖິ່ນດິນລາວ ເຮົາເອີຍ
ຍາມກາງຄືນເຮົາເຄີຍ ນັ່ງຊົມເດືອນແຈ້ງ
ຟັງສຽງແຄນດັງຈ້າວ ມາຕາມລົມວັ່ງໆ
ຄືດັ່ງສຽງແມ່ຮ້າງກ່ອມລູກຫລ້າ ຈາຈ້ອຍອ່ອຍນອນ

ຄອນໆ ຄືສຽງນ້ຳ ລຳຂອງໄຫລລ່ອງ
ຄອນໆ ຄືສິ່ງສ້ອຍ ມະໂນນ້ອຍວິ່ວອນ
ຄອນໆ ຄືຜູ່ເຜິ້ງ ຕອມດອກບິນສະບັດ
ຄອນໆ ຄືລົມພັດ ໄຜ່ເຟືອນເຟືອຍຟ້ອນ

ຟັງໄປຄືສຽງສ້ອຍ ສຸດສະແນນໝາລຽບຫາດ
ຟັງໄປຄືສຽງສາວສຳນ້ອຍ ເຂັນຝ້າຍຢອກກັນ
ຟັງຄືສຽງຈັ້ນໆ ລິດໄພໄຕ່ຕາມລາງ
ຟັງສຽງແຄນເກີນອອນຊອນ ຊື່ນໃຈເຫລືອລ້ຳ

ຍາມໃດມີບຸນບ້ານ ສຽງແຄນດັງກຸ້ມກ່ອມ
ບ່າວສາວ ມານັ່ງລ້ອມ ລຳເຍີ້ຍເອີ່ຍຜຍາ
ຕາມພາສາໄທບ້ານ ລາວເຮົາເຄີຍມ່ວນຊື່ນ
ຫາລື່ນເກີນກວ່ານີ້ ເຫັນນ້ອຍວ່າຊິມີ

ສິ່ງທີ່ເປັນເອກອ້າງ ເຊື້ອຊາດຊາວລາວ ເຮົານີ້
ແມ່ນເຂົ້າໜຽວແລະສຽງແຄນ ໂລກລືທັງຄ້າຍ

ບ່ອນເຂົ້າໜຽວຍັງມີປັ້ນ    ບ່ອນມີແຄນມີຄົນເປົ່າ
ບ່ອນນັ້ນ ເຮົາແນ່ແລ້ວ    ວ່າມີເຊື້ອຊາດລາວ

ສອງຟາກຝັ່ງແມ່ນ້ຳ    ຂອງໃຫຍ່ ໄທ ລາວ
ເມື່ອໄດ້ຍິນສຽງແຄນ    ກໍຊື່ນຊົມຫັນຫ້າວ
ຄັນມີກອນລຳກ້ຽວ    ສຽງແຄນພັດແຮ່ງມ່ວນ
ແຕ່ລະຂົງເຂດບ້ານ    ການກ້ຽວກໍຕ່າງກັນ

ມີລຳເພີນລຳສັ້ນ    ສີທັນດອນຜູ້ໄທໃຫຍ່
ລຳຕັງຫວາຍແລະເຕີ້ຍ    ຜູ້ໄທນ້ອຍຊອກສວັນ
ສາຣະວັນຫລືລຳໃຕ້    ມະຫາໄຊແລະລ່ອງໃຫຍ່
ຂັບຊຳເໜືອແລະທຸ້ມ    ດອນຕານກ້ຽວງື່ມພອນ

ແຄນນີ້ປະກອບດ້ວຍໄມ້ອໍ້    ຫລາຍລູກລຽນລຳ
ນ້ອຍໃຫຍ່ປອງປະສານສຽງ    ຮ່ວມກັນໃນເຕົ້າ
ເອົາສູດຈິກຕາມດີ້ວ    ຕິດກັນໃຫ້ແໜ້ນແກ່ນ
ສຽງຈຶ່ງດັງມ່ວນແມ້ງ    ອອນຊອນໄດ້ດັ່ງໃຈ

ຖ້າແມ່ນເຮົາພີ່ນ້ອງ    ນ້ອຍໃຫຍ່ສາມັກຄີ
ເອົາແຕ່ຄວາມຈິງໃຈ    ຕໍ່ກັນບໍ່ລວງລ້ຽວ
"ເອົາຄວາມຮັກແພງ" ຝັນເຄືອກ້ຽວ    ພົວພັນຕິດຕໍ່
ໝາຍມາດມຸ້ງກໍ່ສ້າງ    ຫຍັງກໍໄດ້ດັ່ງໃຈ ແທ້ແລ້ວ.

ກອນແຄນມີດັ່ງນີ້: ແມ່ຮ້າງກ່ອມລູກ, ລ່ອງຂອງ, ສ້ອຍມະໂນ
ແມງພູ່ຕອມດອກ, ລົມພັດໄຜ່, ສ້ອຍສຸດສະແນນ
ໝາລຽບທາດ, ສາວເຂັນຝ້າຍ ແລະ ລົດໄຟໄຕ່ລາງ.

# ເຂົ້າໜຽວ

⊙ ຕາມແຕ່ໄດ້ພົບພໍ້ ສັພສິ່ງແນວກິນ ມານີ້
ຫາຫຍັງມາປຸນປານ ປຽບເຂົ້າໜຽວບໍ່ມີໄດ້
ແມ່ນກິນຫຍັງມາແລ້ວ ໃນຄໍສິອີ່ມໆ ກໍຕາມທ້ອນ
ເຫັນເຂົ້າໜຽວຮ້ອນໆ ກໍຊວາງປັ້ນໃສ່ມື
⊙ ຕື່ນຂຶ້ນມາມື້ເຊົ້າ ກ່ອນຊິອອກໄປການ
ປັ້ນຈ້ກສອງສາມຄຳ ກໍຫາກພໍຮອງທ້ອງ
ຄັນວ່າມີປາປີ້ງ ປາຈີ່ນສົ້ມຜັກກາດ
ຫລືບໍ່ຊັ້ນກໍສົ້ມ ປານ້ອຍແຮ່ງດີ
⊙ ຄັນແມ່ນມີຊີ້ນແຫ້ງ ໃຫ້ຫາແຈ່ວມານຳ
ເປັນແຈ່ວບອງຂອງມັກ ແຈ່ວຂີງກໍພໍແລ້ວ
ແຈ່ວໝາກແຄ່ນໝາກເຂືອສົ້ມ ປາກະເຕົາແຈ່ວປາແດກ
ແຈ່ວແມງດາແຈ່ວຂ້າ ຫລືບໍ່ຊັ້ນແຈ່ວບີ
⊙ ຄັນບໍ່ຊັ້ນ ສົ້ມໄສ້ ສົ້ມໄຂ່ປາຈາວ
ໝ່ຳກັບໝາກເຂືອສຸກ ຂ່າຂີງສີງໃຄພ້ອມ

ຫລືວ່າມີປາຢ້າງ　　ໜັງເຄັມຈີ່ໃໝ່ໆ
ກັບເຂົ້າໜຽວຮ້ອນໆ　　ກິນແລ້ວບໍ່ຢາກເຊົາ
໐ ຖ້າໄດ້ກິນລາບຊີ້ນ　　ກ້ອຍຈຸ່ມຊອຍເສືອ
ກໍໃຫ້ມີເຂົ້າໜຽວກັບ　　ເຄື່ອງຫອມຜັກພ້ອມ
ເປັນຫອມເປຫອມປ້ອມ　　ບົວຣະພາຫອມເຣືອດ
ຜັກບົ່ວຫົວອີ່ຄູ່　　ແພວກ້ານກ່ຳເສີມ
໐ ຜັກກາດນ້ອຍ　　ກະລ່ຳຫໍ່ຜັກສລັດ
ຕັ້ງໂອທັງຄາວທອງ　　ອີ່ເລີດຂີມກະເດົາດ້ວຍ
ເອົາມາກິນກັບກ້ອຍ　　ໝາກເຜັດດິບໝາກເດື່ອ
ໝາກເຂືອສຸກໝາກແຄ້ງ　　ແຕງນ້ອຍໝາກຖົ່ວຍາວ
໐ ຖ້າແມ່ນລາບໃສ່ເພັ້ຽ　　ຂີມອ່ອນແຮງຄັກ
ຄັນແມ່ນຊາໃຈມັກ　　ຕື່ມບີລີງພ້ອມ
ຢ່າໃຫ້ແຫລວຫລືແຂ້ນ　　ເອົາພໍນ້ຳຈືຈ໊ະ
ບາດເອົາຄຳເຂົ້າຄູ້ຍ　　ຈຶ່ງນົວນົ້ມແຊບດີ
໐ ຖ້າໄດ້ກິນລາບເຕົ້ຽ　　ລາບຊີດຊອຍປາ
ກໍໃຫ້ມີຜັກກັບ　　ເຄື່ອງຫອມຂອງແກ້ມ
ຜັກທີ່ກິນກັບຊີ້ນ　　ກິນກັບປາກໍໄດ້ຢູ່
ແຕ່ມີຜັກເຫລົ່ານີ້　　ມາເພີ້ມກໍຍິ່ງດີ
໐ ເຊັ່ນຜັກຊີຜັກຕິ້ວ　　ຜັກສະເມັກຜັກກະໂດນ
ຜັກໜອກທັງກະຖິນ　　ໝາກມັນກໍກິນໄດ້
ສາຍບົວທັງລີນໄມ້　　ໃບຍົມໝາກສະໄລ່
ຫລືບໍ່ຊັ້ນກໍກ້ອຍ　　ທະນີນ້ອຍແລະປີ
໐ ລາງຄົນມັກໝາກແຄ້ງ　　ຂີມຂື້ນມາກັບ
ລາງຄົນມີຂີ້ປາໝຶກ　　ເໝືອດນຳກໍພໍແລ້ວ

| | | |
|---|---|---|
| | ເຮັດລາບແຫລວດີແທ້ | ມີຫົວຫອຍຊອຍໃສ່ |
| | ກິນໄປບາດຫຍໍ້ພໍ້ | ມັນແຊ້ວຄັກດີ |
| ⊙ | ມີຜັກນໍ້າໃສ່ພ້ອມ | ກໍຫາກຕື່ມຄວາມນົວ |
| | ຄັນແມ່ນມີບືປາ | ໃສ່ນຳກໍພໍໃຊ້ |
| | ບາດເຮົາເອົາເຂົ້າໜຽວຄູ້ຍ | ຕັກກິນເກີນແຊບ |
| | ທີ່ຫລັງມາຈິ່ງປ້ອນ | ຫອມເຂົ້າໃສ່ນຳ |
| ⊙ | ນອກຈາກລາບແລະກ້ອຍ | ເຍື່ອງອື່ນກໍມີຫລາຍ |
| | ເຊັ່ນມອກໝົກຫລົນຫລາມ | ອ່ອມເອາະອົບໜຶ້ງ |
| | ຊວ້າຊຸບຍຳຕຳຕົ້ມ | ແກງເຜົານາບປີ້ນ |
| | ເປັນອາຫານແຊບຊ້ອຍ | ມີໄວ້ຄູ່ເຂົ້າໜຽວ |
| ⊙ | ຖ້າຫາກໄດ້ໝາກຄໍ້ | ຫລືໝາກຂາມຫວານ |
| | ເຖົ້າແກ່ຫລາຍຄົນມັກ | ບ່າຍກິນກັບເຂົ້າ |
| | ຄັນບໍ່ມີຫຍັງແທ້ | ເອົາເກືອໂຮຍເຮັດເຂົ້າຈີ່ |
| | ທາໄຂ່ເຫລືອງໃສ່ດ້ວຍ | ກິນແລ້ວແຊບດີ |
| ⊙ | ຈິນວ່າເປັນຮີດບ້ານ | ສືບຕໍ່ກັນມາ |
| | ເຖິງເດືອນສາມເອົາບຸນ | ເຂົ້າຈີ່ກັນບໍ່ມີເວັ້ນ |
| | ເອົາເຂົ້າໜຽວມາປັ້ນ | ຂາງໄຟທາໄຂ່ |
| | ທານທອດສັງຄະເຈົ້າ | ໃຫ້ບຸນຄ້ຳເມື່ອລຸນ |
| ⊙ | ຖ້າເອົາຫ່າຍໃສ່ບັ້ງ | ໄມ້ໄຜ່ໄປເຜົາ |
| | ເປັນເຂົ້າຫລາມຂອງມັກ | ທຸກຄົນຈຳໄດ້ |
| | ເຜືອກຖົ່ວດຳເປັນໄສ້ | ຫົວມັນນ້ຳກະທິ |
| | ມີແນວເຂົ້າກ່ຳລ້າ | ສຸດແລ້ວຊິເລືອກກິນ |
| ⊙ | ເຂົ້າຫລາມກັບໄກ່ປີ້ງ | ຂອງແຊບແນວມັກ |
| | ເວົ້າມານຳລາຍເຫີຍ | ຄິດຢາກຊີມຈັກບັ້ງ |

ເຂົ້າເໜົ້າທັງເຂົ້າໜຽວແກ້ວ   ຫອມຫວນຊວນຢາກ
ມີໝາກງາໝາກພ້າວ   ໂຮຍໜ້າຢ່າງດີ
⊙ ຖ້າເອົາເຮັດເຂົ້າຕົ້ມ   ຫລາຍຢ່າງຫລາຍຊນິດ
ມີໃຈຄາວໃຈຫວານ   ເລືອກກິນບໍ່ມີອັ້ນ
ໄມ້ປົ່ນມາເປັນແປ້ງ   ຂນົມທຽນຂນົມແໜບ
ຍາມໜຶ້ງຫອມອູ໊ບເອົ້າ   ຊີມແລ້ວແຊບອີຫລີ
⊙ ຄັນເຂົ້າເກົ່າແດ່ແລ້ວ   ແທນທີ່ຊິເອົາກິນ
ເຮົາກໍເອົາໄປດອງ   ໃສ່ໃນໄຫໄວ້
ຕົ້ມກັ່ນກອງເປັນເຫລົ້າ   ບອງຢາມີປໂຍດ
ດື່ມໂພດຫລາຍບໍ່ໄດ້   ຊິໄປແພ້ຮ່າງກາຍ
⊙ ຄັນເຮົາເຮັດຮັບຕ້ອນ   ໂຊກລາບສັລເສີນ
ເປັນງານບຸນມວນມິດ   ຜູ້ຮັກແພງມາພໍ້
ມີເຂົ້າໜຽວມີປີ້ງ   ມີແກງມີລາບ
ມີເຫລົ້າລາວຈອກນ້ອຍ   ກໍສຸດຊັ້ນຊື່ນໃຈ
⊙ ເຄີຍເປັນມາແບບນີ້   ເຊື້ອຊາດຊາວລາວ
ຕາມທົ່ງພຽງພູສູງ   ແຕ່ເໜືອເຖິງໃຕ້
ມີໄຮ່ຂວາງນາກວ້າງ   ພາກັນສ້າງສ່າວ
ຈີນດິນລາວລ້ານຊ້າງ   ເປັນເລົ້າແຫລ່ງເຂົ້າໜຽວ
⊙ ຊາດອື່ນເຂົາຮັກໝັ້ນ   ອາຫານຊາດຂອງເຂົາ
ລາວກໍຄວນພູມໃຈ   ຮັກເຂົ້າໜຽວເຮົາໄວ້
ຢ່າໃຫ້ດັບສູນສິ້ນ   ຂອງກິນປະຈຳຊາດ
ບາດລູກຫລານແວ່ຢັຽມ   ພໍໄດ້ປັ້ນໃສ່ມື ຊັ້ນນາ.

# ຮີດສິບສອງ

⊙ ເຖິງເດືອນຈຽງ ລ້ຽງແຖນລ້ຽງໄທ້
ລ້ຽງເຈົ້າໃຫຍ່ ຜີມິດຜີໝໍ່
ລ້ຽງເຈົ້າຫໍ່ ເຈົ້າຖານເຈົ້າທີ່
ລືມວີ່ໆ ໝາວທົ່ວກາຍາ

⊙ ຍາມນີ້ມາ ແມ່ນບຸນບ້ານທາດ
ມ່ວນຂນາດ ບຸນທາດອີງຮັງ
ຟັງລຳຄອນ ສວັນຍ່າງໃຫຍ່
ຫອມປີ້ງໄກ່ ແລະບັ້ງເຂົ້າຫລາມ

⊙ ຢູ່ຕາມລານ ຊາວນາຟາດເຂົ້າ
ຝູງລູກເຕົ້າ ມາຊ່ວຍແຮງງານ
ຜູ່ຊຳນານ ເລືອກພັນເຂົ້າໄວ້
ເພື່ອໃຫ້ໄດ້ ເຂົ້າປູກແນວດີ

⊙ ຕາມພິທີ ໃນທ້ອງເດືອນຍີ່
ມີພວກພີ່ ນ້ອງນຸ່ງວີງວານ
ມາຊ່ວຍກັນ ເຮັດຄູນຂວັນເຂົ້າ
ຂີນຂຶ້ນເລົ້າ ທັງຫາບທັງຫາມ

⊙ ເຖິງເດືອນສາມ ອອກໃໝ່ສາມຄ່ຳ
ເຖົ້າຈີດຈ່ຳ ຖືເປັນວັນໄຊ
ຖ້າຜູ່ໃດ ໄຂປະຕູເລົ້າ
ແລ້ວຕັກເຂົ້າ ມາຕຸ່ມມາຕຳ

⊙ ເປັນເຂົ້າເປືອກ ຕັກບໍ່ມີບົກ
ເປັນເຂົ້າສຸກ ຈົກບໍ່ມີແປ້ວ
ຍາມນີ້ແລ້ວ ກິນບໍ່ມີປາກ
ຍາມນີ້ແລ້ວ ນາກບໍ່ມີຮູຂີ້

⊙ ຫົວສີໃຄ ມີດອກ
ຍາມຄົກ ປົ່ງຮາກ
ຍາມສາກ ປົ່ງໃບ
ເກີດຂຶ້ນໄວ ຄາວດຽວຫາຍວັບ

⊙ ຊິ່ວຊ້າງພັບຫູ ຊິ່ວງູແລບລີ້ນ
ບໍ່ເວົ້າຫລີ້ນ ມີແທ້ອີ່ຫລີ
ເດືອນສາມເພັງ ມີບຸນຫລາຍບ່ອນ
ບຸນເມືອງເກົ່າ ບຸນທາດພະນົມ

⊙ ບຸນວັດພູ ແລະບຸນທາດໂພ່ນ
ພາກັນມ່ວນ ຢາດນ້ຳທຳທານ
ພ້ອມດຽວກັນ ແມ່ນບຸນມະຄະ
ບໍ່ໄດ້ລະ ຄອງເກົ່າອັນດີ

⊙ ຮີດເຮົາມີ ເຮັດບຸນເຂົ້າຈີ່
ເຖິງເດືອນສີ່ ຕາມວັດຕາມວາ
ແຫ່ກັນມາ ເອົາບຸນພະເວດ
ມາຟັງເທດ ເຣື້ອງເວດສັນດອນ

⊙ ເດືອນຫ້າຊອນ ໃສ່ບຸນປີໃໝ່
ນ້ອຍແລະໃຫຍ່ ລົງສ່ອຍນ້ຳມົນ
ໃຫ້ທຸກຄົນ ໃສງາມຄືແວ່ນ
ເດືອນຫົກແມ່ນ ບຸນວິສາຂາ

⊙ ເຖົ້າແກ່ມາ ຮັບສິນຟັງເທດ
ແຕ່ຢູ່ເຂດ ນອກວັດອອກໄປ
ບຸນບັ້ງໄຟ ສຽງຟົດສນັ່ນ
ຟ້າຮ້ອງລັ່ນ ຝົນຫລັ່ງລົງມາ
⊙ ພວກຊາວນາ ຕຽມໄຖຕຽມຄາດ
ຝົນບໍ່ຂາດ ເດືອນເຈັດເລີຍດຳ
ແຕ່ໄດ້ທຳ ການຈຳ້ຕາແຮກ
ປຸກຫໍ່ແຈກ ຈ້ຳເຈົ້າຫົວເໝືອງ
⊙ ໄຫວ້ຫລັກເມືອງ ມະເຫສັກຫລັກບ້ານ
ມາຊ່ວຍຊວ້ານ ການປູກການຝັງ
ໃຫ້ສົມຫວັງ ພໍໃຈທຸກຢ່າງ
ເດືອນແປດຫ້າງ ບຸນເຂົ້າພັນສາ
⊙ ໄຫວ້ຄູບາ ສາມເດືອນຈຳວັດ
ຖືເຄັ່ງຄັດ ຄອງສາສນາ
ເດືອນເກົ້າມາ ຫວານຄາວຕຽມເຕົ້າ
ບຸນຫໍ່ເຂົ້າ ປະດັບປະດິນ
⊙ ທານໃຫ້ວິນ ຍານຜູ່ລ່ວງລັບ
ໃຫ້ໄດ້ຮັບ ເປັນສ່ວນກຸສົນ
ເດືອນສິບວົນ ນຳຫໍ່ເຂົ້າສລາກ
ເປັນຂອງຝາກ ອຸທິດຜູ່ຕາຍ
⊙ ໃຜບຸນຫລາຍ ຈຶ່ງໄດ້ໄປເກີດ
ບ່ອນລຳເລີດ ຄືເມືອງສວັນ
ຈັນເຕັມດວງ ເດືອນສິບເອັດພຸ່ງ
ເຂົ້າສຸກຮຸ່ງ ຫອມທົ່ວທົ່ງນາ

⊙ ຍາມນີ້ມາ ຊາວນາເກັບກ່ຽວ
ແລ້ວຈຶ່ງຂົ້ຽວ ຂົນເຂົ້າສູ່ລານ
ປີ້ງປາມັນ ກິນກັບເຂົ້າໃໝ່
ໝົດເຂົ້າໄຮ່ ມາກິນເຂົ້ານາ
⊙ ອອກພັນສາ ແຫ່ຜາສາດເຜີ້ງ
ເປັນຕາເບິ່ງ ແມ່ນບຸນຊ່ວງເຮືອ
ມ່ວນເອົາເຫລືອ ຄືນມາຄັບຄັ່ງ
ນັ່ງຈົນຄ່ຳ ເບິ່ງໄຫລເຮືອໄຟ
⊙ ໄຕ້ໂຄມໄຟ ບູຊາພຣະເຈົ້າ
ບຸນຕາບເທົ້າ ຮອດເດືອນສິບສອງ
ສຽງເນືອງນອງ ແຫ່ກາລະພຶກ
ມ່ວນພິລຶກ ແມ່ນບຸນຄົນຖີນ
⊙ ຕາມໄດ້ຍິນ ໄດ້ເຫັນໄດ້ຮູ້
ມ່ວນກວ່າໝູ່ ແມ່ນບຸນທາດຫລວງ
ກັບສີເມືອງ ອິນແປງອົງຕື້
ວັນສີ່ມື້ ສຽງເສບເນືອງນັນ
⊙ ໄຫວຽງຈັນ ມາໂຮມແໜ້ນອັ່ງ
ຄົນສອງຝັ່ງ ອ້ອມແອ້ມແຄມຂອງ
ມາສລອງ ຟັງທັມຕັກບາດ
ມາໄຫວ້ທາດ ຕາງທ່ຽວບຸນນຳ
⊙ ເມື່ອສິ້ນຍາມ ບຸນຄົນຖີນແລ້ວ
ບໍ່ຄາດແຄ້ວ ກອງບວດກອງບຸນ
ບັງສະກຸນ ອັດຖະຜ້າປ່າ
ກໍຍ້ອນວ່າ ໃຈໃສສັດທາ

໐ ຈຶ່ງມີມາ ຈົນເທົ່າດຽວນີ້
ຮີດແຕ່ກີ້ ຄອງເກົ່າໂບຮານ
ເຮົາລູກຫລານ ເກີດມາພາຍຊ້ອຍ
ຄວນຄິດຊ່ອຍ ປົກປັກຮັກສາ
໐ ພັທນາ ໃຫ້ບ້ານແລະວັດ
ພອຍໄດ້ຮັບ ຄວາມສີວິໄລ
ສົມຫົວໃຈ ທະນຸງອົງອາດ
ຮັກເຊື້ອຊາດ ແລະຮີດຄອງລາວ.

໔໗ - ກ ໗໙

# ຜົວແກ້ວ

ຊ່າງຮູ້ຈັກຍົກຍ້ອງ ຍໍກຽດພັນລະຍາ
ທັງບໍ່ນິນທາຂວັນ ແລະເຮັດແນວໃຫ້ເສັຽໜ້າ
ບໍ່ເຜືອນຫາມີຊູ້ ເມັຽສອງມາຄອງຄອບ
ມອບຄວາມເປັນໃຫຍ່ໃຫ້ ເມັຽນີ້ຜູ້ດຽວ
ທຽວພົບພໍ້ ເຄື່ອງແຕ່ງສໍາອາງ
ເຊັ່ນສ້ອຍຄໍສາຍແຂນ ເພັດແຫວນຂອງເອ້
ຊື້ຕິດມືມາຕ້ອນ ໃຫ້ເມັຽແພງໄວ້ໃສ່
ໃຜໄດ້ຜົວແບບນີ້ ບູຊາໄວ້ຢູ່ຄູ່ຍາມ ນັ້ນທ້ອນ

# ເມັຽຂວັນ

ມັກລະບຽບຮຽບຮ້ອຍ ຈັດແຈ່ງເຮືອນຊານ
ສິ່ງເຄາະຊຸມວິງວານ ຝ່າຍຜົວກໍດີພ້ອມ
ມີໃຈດຽວພຽນນ້ອມ ບໍ່ຍອມເຜືອນຫາຊາຍອື່ນ
ຊັບສິນຜົວຍື່ນໃຫ້ ພຽນທ້ອນຮີບໂຮມ
ບໍ່ເປັນຄົນກຽດຄ້ານ ຕໍ່ວຽກການງານ
ຕົກແຕ່ງແປງປຸງອາຫານ ກໍແຊບນົວດີດ້ວຍ
ຊາຍໃດຫລອນຫລິງພໍ້ ໄດ້ເມັຽເປັນຄືວ່າມານີ້
ຄວນຖນອມຮັກໄວ້ ສເມີແກ້ວແກ່ນຕາ ພຸ້ນເດີ

# ຄະຕິທັມ

**ສິນ** ນັ້ນປຸນປຽບເບົ້າ ເຫລົາຫລໍ່ໃຈຄົນ
**ທັມມະ** ເປັນຢາທາ ຕົ່ມສີໃຫ້ໃສເຫລື້ອມ
**ປັນຍາ** ຄືແສງແຈ້ງ ແຍງທາງບ່ອນທຽວທ່ອງ
**ສະຕິ** ປຽບດັ່ງເຂັມທິດຊີ້ ໄປໝ່ອງບ່ອນໝາຍ
**ທານ** ເປັນແຮງຊ່ວຍຍູ້ ຊູສິ່ງໃຫ້ເຖິງຈຸດ
ປິດເປື້ອງຄວາມໂລພາ ທີ່ຈ່ອງດຶງໃຈໄວ້
**ສະມາທິ** ບັນຊາຄຸ້ມ ປະຄອງໃຈໃຫ້ຖືກຮ່ອມ
ບ່ອນໃດຜິດໃຫ້ແກ້ ບ່ອນດີແລ້ວໃຫ້ສິ່ງເສີມ
**ກາຍາ** ປຽບດັ່ງເຮືອຢູ່ນ້ຳ **ຈິດ** ຄືດັ່ງຄົນພາຍ
**ກິເລດຕັນຫາ** ເປັນກະແສ ແມ່ນະທີບ່ອນເຮືອຂວ້າມ
**ບາບບຸນ** ເປັນລົມຍູ້ ຊູເຮືອໃຫ້ເຄື່ອນທີ່
**ວິຣິຍາ** ຄືໄມ້ແຈ້ວ ຕັດຄື້ນຜ່າຟອງ
ຟອງນິ່ງນັ້ນ ຢູ່ນອກກາຍາ
ເຊັ່ນ ລາບຍົດສັລເສີນ ກ່າວຂວັນຍໍຍ້ອງ
ຟອງສອງຈອງຈັບໝັ້ນ ດອງສັນດານອາສາວະ
ໂລບໂກດຫລົງເຫລົ່ານີ້ ເປັນຟອງລີ້ຢູ່ໃນ
**ນິພານ** ຄືຝັ່ງນ້ຳ ບ່ອນເຮົາປາຖນາເຖິງ
ຊາດເກີດ ມາເປັນຄົນ ປຽບດັ່ງເຮືອຢູ່ກາງນ້ຳ
ຍາມເມື່ອ ມໍຣະນາ ມ້ວຍ ແມ່ນຍາມເຮືອເຮົາຈອດ

**ນາຣິກ ນິພານ** ເປັນທ່າຖ້າ ລໍຕ້ອນຮັບເຮືອ
**ອະວິຊາ** ເປັນສາຍນ້ຳ ເນັ່ງໄປໃສ່ທ່ານາຣິກ
**ມັກ ໘** ເປັນສາຍທາງ ເນັ່ງໄປນິພານພຸ້ນ
**ອະທິຖານ** ຄືການຕັ້ງ ໃຈໄປໃຫ້ມົ້ມຝັ່ງ
**ຂັນຕິ** ຄືການອົດຜ່ານ້າງ ມານຮ້າຍລັດທາງ
ພຣະໂຄດົມເພິ່ນໃຊ້ ຫ້າຮ້ອຍຊາດຈຶ່ງບັນລຸ
ປຸທຸຊົນຄືເຮົາ ອີກຊາດໃດຈຶ່ງໄປມົ້ມ. ๛

໒໕ - ໑໐ - ໒໐໐໐

# ບຸນຄຸນພໍ່ແມ່

ຄັດຈາກໜັງສື ສີຣິ ຈັນໃທວາດ

ຟັງເຍີ ພວກໝູ່ເຈົ້າ    ຊຸມລູກເຫລັນຫລານ
ເຫດການໃນຊີວິດ    ແມ່ນໃຜບໍ່ເຫັນໄດ້
ໃຫ້ຄ່ອຍເອົາໃຈຕັ້ງ    ຟັງຄຳສອນສັ່ງ ນີ້ເດີ
ຕາງເປັນແສງສ່ອງຊີ້    ພໍ່ຮູ້ທິດທາງ

ເຈົ້າໃຫຍ່ໄປພາຍໜ້າ    ມີເຮືອນຊານສືບພໍ່ແມ່
ຄວາມຜິດໃຫ້ເຈົ້າເວັ້ນ    ຄວາມຮູ້ໃຫ້ໝັ່ນຫາ
ຖ້າຈັກທຳການສ້າງ    ນາສວນຮົ້ວໄຮ່ ກໍດີທ້ອນ
ຢ່າໄດ້ເຫັນແກ່ໜາວແລະຮ້ອນ ໃຫ້ພຽນແລ້ວຖືກຣະດູ

24/VII

ຄັນທຳມາຫາກິນ ເຈົ້າຂີ້ຄ້ານ    ບໍ່ຟ້າວຟັ່ງຕາມເວລາ
ມົວແຕ່ສາຣະວົນຫາ    ທ່ຽວຊະເລີງມງ້ວງ
ເອົາແຕ່ຄວາມສນຸກຫລິ້ນ    ຄວາມກິນບໍ່ຄິດຮ່ຳ
ຍາມເພິ່ນໄປດຳນາ ໂຕຈຶ່ງໄດ້ຫວ່ານກ້າ ນາຫລ້າເຂົ້າບໍ່ງາມ

ເຮັດສວນຮຸ່ນຂຶ້ນຖ້ວມ    ຖິ້ມຂອງແພງໂຕປູກຫວ່ານ
ຄັນມີຜົນ ກໍຫາກໄດ້ເລັກນ້ອຍ    ບໍ່ພໍກຸ້ມຮອດຂວບປີ
ຄັນວ່າເຂົ້າຮັບໃຊ້    ໃນຝ່າຍພານິດ ກໍດີ
ຖ້າບໍ່ມີຈິດໃຈ    ຕໍ່ວຽກງານຈິງແຈ້ງ
ແຍງແຕ່ໃນທາງຫລິ້ນ    ນາຣີ ໄພ້ ຖົ່ວ

ຫາແຕ່ຄວາມຊົ່ວເຂົ້າ ເງິນໃຊ້ຊິບໍ່ມີ ແທ້ດາຍ
ລາຍນີ້ ເປັນຮ່ອມໃຫ້ ເຮົາເກີດຄວາມທຸກ
ມູນມັງມີປານໃດ ຊິຈ່າຍກິນຈິນກ້ຽງ
ຄິດໄປຫລາຍມັນເລີຍຫຍຸ້ງ ຜົວກັບເມັຽເວົ້າບໍ່ຄ່ອງ
ກັນແລ້ວ

ທາງຜົວເຮັດໜ້າບຶ້ງ ທາງເມັຽເຮັດໜ້າບັຽວ
ສຽງເຂັ້ມເຂົ້າໃສ່ກັນ
ຕື່ນຂຶ້ນມາຊອມເອົາເຣື້ອງ ຜິດຖຽງກັນປ້ອຍດ່າ
ຄວາມທຸກມາແລ່ນຕ້ອງ ໃຈຮ້ອນຍິ່ງກວ່າໄຟ
ຕົ້ນຫາມາກວມກຸ້ມ ເປັນຂະໂມຍລັກຂອງເພິ່ນ
ທຳອິດ ລັກແຕ່ຂອງເລັກນ້ອຍ ໃຈກ້າເກີດລັກຄວາຍ
ເງິນຄຳຫລັກເຂົາໄດ້ ຈິບຫາຍໄວປານມີປີກ
ຫາກິນບໍ່ອີ່ມທ້ອງ ຊ້ຳເປັນໜີ້ໃຫ້ເພິ່ນຫຍັນ
ຄັນໃຜເປັນດັ່ງນີ້ ກໍແມ່ນບາບເວນກັມ ນັ້ນແຫລ້ວ
ພໍ່ແມ່ສອນທາງດີ ລູກມັກໄປທາງຮ້າຍ
ໃຜບໍ່ມາທຳໃຫ້ ໂຕທຳເອງເປັນໂທດໃຫຍ່
ຄຸນພໍ່ແມ່ລ້ຽງແຕ່ນ້ອຍ ຊິແທນໄດ້ດ້ວຍເຍື່ອງໃດ
ກຸ້ມຕົວເອງກໍທັ້ງເຍື້ອນ ຊິເອົາຫຍັງລ້ຽງພໍ່ແມ່
ເສັຽແຮງແພງເຈັ່ຽອູ້ມ ພຽນຕູ້ມໃຫ້ໃຫຍ່ສູງ
ຫວັງຊິກຈູງຊູໜ້າ ຍາມຊະລາພໍ່ໄດ້ເພິ່ງ
ເບິ່ງໃຫຍ່ມາ ເປັນດັ່ງໂຈນຜູ້ຮ້າຍ ຊ້ຳຂາຍໜ້າຂີ້ໃສ່ຄຸນ
ແນວລູກດີ ເຂົາພຽນລ້ຽງ ທຳການງານຊ່ວຍພໍ່ແມ່
ໜັກເບົາຊູຊ່ວຍຊວ້ານ ຄວາມແຄ້ນບໍ່ໃຫ້ມີ

ແມ່ນຕຳເຂົ້າແລະຫາບນ້ຳ ຕົກແຕ່ງແລງງາຍ ກໍດີ
ບໍ່ໃຫ້ເຄືອງເຖິງມື ພໍ່ແມ່ຕົນຕາມລ້ຽງ
ຍາມຊະລາຫລືເຈັບໄຂ້ ອົດສາພຽນບໍ່ໃຫ້ຍາກ
ຂີ້ຍ່ຽວພຽນເຊັດລ້າງ ບໍ່ວາງເຖົ້າໃຫ້ຢູ່ພອຍ
ເຮັດຄືຕອນ ໂຕຍັງນ້ອຍ ແທນຄຸນເພິ່ນລ້ຽງຍາກ
ອຸປະຖາກ ທຸກຄ່ຳເຊົ້າ ພຽນຕັ້ງຕອບຄຸນ
ຄັນແມ່ນ ມັກຢາກເຂົ້າ ເຮັດວຽກນຳຫລວງ ກໍດີ
ມີງານທຳທັງສັກສີ ຊ່ວຍສ້າງສາເມືອງບ້ານ
ແບ່ງເງິນເດືອນສິ່ງໄປໃຫ້ ແທນບຸນຄຸນລ້ຽງພໍ່ແມ່
ຕາມແຕ່ຫລາຍແລະນ້ອຍ ສົມຊັ້ນກຽດຕະກຸນ
ຄັນມັກເຂົ້າບວດສ້າງ ພຽນພ່ຳພາວະນາ
ສຶກສາໃນຄອງທັມ ບາບບຸນໄດ້ເຫັນແຈ້ງ
ຄວນໄຄ່ສິດສອນເຖົ້າ ໄປຕາມຄອງພຸດທະບາດ
ແມ່ນວ່າຊີບເພິ່ນວາຍ ໝາຍທຳບຸນຍາດນ້ຳ
ເຖິງເຖົ້າໃຫ້ຢູ່ເຢັນ

ລູກໃດເຮັດດັ່ງນີ້
ຊື່ວ່າເປັນລູກແກ້ວ ແສນປະເສີດເມືອງມະນຸດ
ຄັນແມ່ນໃຜບຸນມີ ຈຶ່ງຄ່ອຍຫລອນຫລິງພົ້
ຂໍລູກຫລານເຫລັນຫລ້ອນ ທັງຫລາຍຈຳຈື່ເອົາທ້ອນ
ໃຜກະທຳຊອບໄດ້ ໄປໜ້າຊິຮຸ່ງເຮືອງຍິ່ງແຫລ້ວ.

# ສຸພາບຊົນ

ຫົວຍິ້ມແຍ້ມ ໃນທີ່ຊຸມຊົນ
ຄົບຜູ້ອ່ອນຫລຸດຕົນຄວນທັກ ກ່ອນເຂົາຊິມາທັວງ
ປນົມມືໄຫວ້ ອະວຸໂສເຖົ້າແກ່
ພົບທີ່ງຮ້ານທຳໄຫວ້ ເພິ່ນໃຫ້ຍຳ
ໜ້າຊື່ນຊ້ອຍ ຍາມຮັບຄວາມເຄົາຣົບ
ຍາມຮັບຄວາມຊົມເຊີຍ ໃຫ້ຖ່ອມຕົນຕົວນ້ອມ
ບໍ່ຖູຍໂມ້ ວາຍໂວໂອ້ອວດ
ບໍ່ຂົ່ມພຸ້ນ ມາຍ້ອງຕັ້ງແຕ່ໂຕ
ໃຈເອື້ອເຟື້ອ ເມື່ອແຂກມາຢາມ
ຕາມຖານະ ເພດວັຍຊົນຊັ້ນ
ຍິນດີດ້ວຍ ໃນຍາມຖືກຕ້ອນຮັບ
ຈະແມ່ນແຂກແປກໜ້າ ກໍຄວນໃຫ້ຊື່ນດອມ
ຜິດພາດພັ້ງ ສາລະພາບໂດຍດີ
ສັດສີ່ຕີນບາງທີ ພະລາດດີນກໍເປັນໄດ້.

# ປັນຍາຊົນ

| | |
|---|---|
| ຮູ້ຮາກເຫງົ້າ | ສາເຫດສຸກທຸກ |
| ຫລິງເຫັນຜົນ | ຊິເກີດຕາມພາຍທ້າຍ |
| ມີສະຕິຮູ້ | ຕົວເອງທຸກເມື່ອ |
| ສຳນຶກໄດ້ | ຕະກຸນຊັ້ນຊາດຕົນ |
| ຈັບຈ່າຍໃຊ້ | ສິນຊັບມູນມັງ |
| ປະຣິມານຕາມ | ທີ່ຕົນຫາໄດ້ |
| ຫັດຮຽນຮູ້ | ຣະດູການປະກອບວຽກ |
| ເຮັດຖືກປ້ອງ | ຜົນໄດ້ຍິ່ງຫລາຍ |
| ຫາຊອກຮູ້ | ກົດລະບຽບສັງຄົມ |
| ແນວເປັນໄພ | ໃຫ້ເອົາຕົວເວັ້ນ |
| ສັງເກດໄວ້ | ລັກສນະຍິງຊາຍ |
| ເພື່ອນກິນມັກມີຫລາຍ | ເພື່ອນຕາຍມັກມີໜ້ອຍ. |

# ສວັນໃນອົກ

ໃຜຜູ່ປະກອບດ້ວຍ ຄວາມເມດຕາຈິດ
ຖືເອົາຄວາມສຸຈຣິດ ທ່ຽງທັມເປັນຫລັກໝັ້ນ
ໃຈຄ່ອງກັນເທົ້າຜອງເຖົ້າ ຜົວເມັຽດຽວຮັກຮ່ໍ
ບໍ່ໝາຍລົ້ຫລອກຕົ້ມ ຍາມເວົ້າປາກດອມ
ມີສະຕິພຽບພ້ອມ ເພື່ອປະກອບຄວາມດີ
ທັງມີຄວາມດຸດັນ ໝັ່ນພຽນເຫລືອລ້ຳ
ຊ່ຳຂຍັນຫັນຫ້າວ ເຖິງຄາວວຽກຫຍຸ້ງຍາກ
ຮັກຫອມມັຽນມັດໄວ້ ຂອງໃຊ້ເຄື່ອງສອຍ
ຮູ້ນັບຖືຮີດບ້ານ ກົດລະບຽບສັງຄົມ
ຮູ້ປະມານກຳລັງກາຍ ຊັບສິນປັນຍາພ້ອມ
ຜູ່ນັ້ນມີຫວັງມົ້ມ ກອງໄຟຄວາມທຸກ
ມີແຕ່ສຸດຊື່ນຊ້ອຍ ຈີນເທົ້າຊົ່ວຊີວັງພຸ້ນແລ້ວ.

# ນາຣົກໃນໃຈ

ໃຜຜູ່ປະກອບດ້ວຍ ຄວາມໂລບໂກທາ
ຫາສ້າງກັມທຳເຂັນ ກໍ່ເວນບໍ່ວາງເວັ້ນ
ເປັນຜົວເມັຽມີໃຈລັຽວ ຜິດຖຽງກັນປ້ອຍດ່າ
ຫາທ່ຽວລົ້ຫລອກຕົ້ມ ຊາວບ້ານໝູ່ປະຊາ

ມີສະຕິຕ່ຳຊ້າ ຊອບໃນສິ່ງເລວຊາມ
ເອົາຄວາມຄ້ານເປັນນາຍ ເຮັດວຽກເອົາສ່ຳ "ພໍແລ້ວ"
ວຽກໃດສັບສົນຫຍຸ້ງ ວາງມິປະປ່ອຍ
ບໍ່ຮັກຫອມອ່ອມໄວ້ ຂອງໃຊ້ເຄື່ອງສອຍ
ບໍ່ນັບຖືຮີດບ້ານ ກົດລະບຽບສັງຄົມ
ບໍ່ປະມານກຳລັງກາຍ ຊັບສິນຕົນໄດ້
ຜູ້ນັ້ນມີຫວັງເຂົ້າ ອະເວຈີໝໍ້ໃຫຍ່
ພົບແຕ່ຄວາມເດືອດຮ້ອນ ຈົນເທົ້າຊົ່ວຊີວັງ ພຸ້ນແລ້ວ.

໔໗ - ໐໑ - ໙໙

# ຈິດເປັນນາຍກາຍເປັນບ່າວ

◉ ທາດແທ້ ຈິດນັ້ນເປັນດັ່ງແກ້ວ ໃສສ່ອງແວວວາວ
ມີສີໃດມາຕິດ ກໍຮຸ່ງຕາມສີນັ້ນ
ພຣະໂຄດົມສອນໄວ້ ວ່າມີສີສອງປະເພດ
ມາຫໍ່ຫຸ້ມ ຈິດນັ້ນຢູ່ສູ່ຍາມ

◉ ສີໝວດໜຶ່ງມາຈາກເຫວົ້າ ເຈົ້າພໍ່ຍົມພິບານ
ເປັນອະບາຍພູມຖານ ຮຽກນະຄອນແຖວນັ້ນ
ໃນອານາຈັກກວ້າງ ມີເມືອງຢູ່ສີ່ແຫ່ງ
ຜລິດສີສິ່ງໃຫ້ ໃຈຜູ່ປາຖນາ

◉ ສີທີ່ມາຈາກແຄວັນ ແດນດ່ານເມືອງນາຣົກ
ເມື່ອເອົາມາທາຈິດ ກໍເກີດເປັນໄຟຮ້ອນ
ສີຈາກເດັຽຣະສານນັ້ນ ເປັນສີໝອງໝົ່ນ
ພາຈິດຄິດຕ່ຳຊ້າ ບໍ່ມີກ້າວພັທນາ

◉ ສີເອົາມາຈາກເບື້ອງ ເມືອງເພດຜີສາງ
ທາໃສ່ຈິດດວງໃດ ສ້າງແຕ່ຄວາມກົວຢ້ານ
ສີທີ່ມາຈາກກາ້ ອະສຸຣະກາຍແດນດ່ານ
ທາແລ້ວຈິດຄິດຄົ້ນ ຫາລົ້ຫລອກລວງ

◉ ສ່ວນສີໝວດສອງນັ້ນ ຜລິດຈາກເມືອງສວັນ
ຊັ້ນນຶ່ງມີພຍາອິນ ຢູ່ປອງເປັນເຈົ້າ
ຊັ້ນສອງເປັນຫົວໜ້າ ພຍາພຣົມ ຊີ້ເພິ່ນ
ຜລິດສີມຸກເຫລື້ອມ ໃຫ້ໃຈຜູ່ປາຖນາ

⊙ ສີຈາກສອງຊັ້ນນີ້ ອະນຸພາບບໍ່ເໝືອນກັນ
ປຽບແສງເດືອນແລະແສງດາວ ຕ່າງກັນສັນນັ້ນ
ສັນໃດໄດ້ ເປັນສີຜຸດຜ່ອງ
ກໍານົດສີຢູ່ຫັ້ນ ມີໄວ້ສີ່ສີ

⊙ ສີນຶ່ງນັ້ນ ຊື່ວ່າ ເມດຕາທັມ
ເອົາໄປທາຈິດໃດ ກໍເກີດຄວາມຮັກແພງຂຶ້ນ
ສີສອງນັ້ນ ກະຣຸນາ ເປັນຊື່
ທາແລ້ວຈິດຄິດຕັ້ງ ຫວັງຊວ້ານຊ່ວຍຄົນ

⊙ ສີສາມນັ້ນ ມຸທິຕາ ເພິ່ນວ່າ
ທາແລ້ວສຸກທຸກເຂົ້າ ຈິດສູ້ຊື່ນດອມ
ສີສີ່ນັ້ນ ນາມວ່າ ອຸເປຂາ
ທາແລ້ວຈິດເປັນສງົບ ເກີດກະເສີມສໍາລານຂຶ້ນ

⊙ ຖ້າໃຜປາຖນາຮູ້ ສີຈິດທີ່ຕົນມີຢູ່ນັ້ນ
ເອົາຈິດຕົນມາແລ ທຽບແມ່ພິມທີ່ມີໄວ້
ວ່າຈິດຕົນພອຍໂນ້ມ ໄປສີໃດແດ່
ຖ້າເປັນສີບໍ່ມັກແລ້ວ ພໍຊິໄດ້ປ່ຽນແປງ

⊙ ຈິດໃດຫາກຫຸ້ມດ້ວຍ ສີມາຈາກນາຣົກ
ຈິດນັ້ນປານແປວໄຟ ລວກລົນລາມໄໝ້
ເຖິງມີຫໍເຮືອນກວ້າງ ເຢັນສບາຍໃຫ້ຢູ່ ກໍດີຫ້ອນ
ຈິດພາກາຍເດືອດຮ້ອນ ແດດົ້ນຫ່ວນຣົນ

⊙ ຖ້າຖືກສີຈາກກໍ້ ແດນດ່ານເດັຽຣະສານ
ຈິດຊອບຄວາມມົວໝອງ ສາບສະອາງເປິເປື້ອນ
ແມ່ນຈະເນົາໃນຫ້ອງ ຫໍໂຮງສວຍສອາດ ກໍຕາມຫ້ອນ
ຈິດພາກາຍປ່ອຍໃຫ້ ສູນເສົ້າເກົ່າໝອງ

⊙ ຫລືແມ່ນສິຈາກຫ້ອງ　　ເມືອງເຜດພິສາງ
ຈິດຊອບໂມໂຫໂທໂສ　　ອວດແຮງຮຸນຮ້າຍ
ເຖິງເນົາໃນນະຄອນກວ້າງ ງາມຕາໜ້າຢູ່ ປານໃດນັ້ນ
ຈິດພາກາຍຊອກເຣື່ອງ　　ເພມ້າງວຸ່ນວາຍ
⊙ ຖ້າສິມາຈາກເບື້ອງ　　ເມືອງຊື່ ອະສຸຣະກາຍ
ຈິດຊອບທຳມານຍາ　　ຫລອກຫລອນລວງລໍ້
ຄືນຢູ່ໃນນະຄອນນັ້ນ　　ບູຊາທັມທັດທ່ຽງ
ຈິດພາກາຍໃຊ້ເລ້　　ຫາຕົ້ມໝູ່ກິນ
⊙ ຖ້າຫາກຈິດຫຸ້ມດ້ວຍ　　ສິເມດຕາທັມ
ຈິດຊອບທຳຄວາມດີ　　ຜູກໄມຕຣີຂຶ້ນ
ແມ່ນຈະຕົກໄປກ້ຳ　　ແດນກັນດານຫຍຸ້ງຍາກ
ຈິດພາກາຍສ້າງສ້ອຍ　　ຮັກແພງໄວ້ຕໍ່ກັນ
⊙ ຫລືວ່າຈິດຫຸ້ມດ້ວຍ　　ສິຊື່ ກະຣຸນາ
ຈິດນີ້ຊອບຫາປົດຄວາມທຸກ　　ໃຫ້ຜ່ອນຄາຍລົງໄດ້
ແມ່ນມີແນວມາຫຍຸ້ງ　　ສັບສົນໜັກໜ່ວງ
ຈິດພາກາຍຊ່ວຍຊວ້ານ　　ໃຫ້ເບົາຂຶ້ນກວ່າຫລັງ
⊙ ຫລືວ່າຈິດໂອບດ້ວຍ　　ສິຊື່ ມຸທິຕາ
ຈິດນີ້ຍິນດີດອມ　　ສະພາບການທີ່ມີຂຶ້ນ
ສຸກທຸກໃດມາຂວ້າງ　　ຂວາງທາງຊີວິດ
ຈິດພາກາຍຕັ້ງໜ້າ　　ຂັນສູ້ຊື່ນດອມ
⊙ ຫລືຈິດຫຸ້ມຫໍ່ດ້ວຍ　　ສິທີ່ຊື່ ອຸເປຂາ
ຈິດນີ້ມີລິດທີແຮງ　　ສ່ອງເຫັນໄກໃກ້
ແມ່ນມີອິລຫິນຮ້ອນ　　ອັນຕລາຍບັງເກີດ
ຈິດພາກາຍທ່ຽງໝັ້ນ　　ບໍ່ເຟືອນຟົ້ງຫວັ່ນໄຫວ

⊙ ຈິດທີ່ຫຸ້ມຫໍ່ດ້ວຍ　　ສິນາຈາກສຸຄະຕິ
ຈະນຳພາກາຍໄປ　　ສູ່ແດນນິພານພຸ້ນ
ກ້າວຂຶ້ນໄປຕາມຊັ້ນ　　ຂັ້ນໄດສູງຫລາຍຍ່ານ
ເອົາສິນສະມາທິປັນຍາເປັນເຄື່ອງຍູ້ ຊູຂຶ້ນຈຶ່ງຄ່ອຍເຖິງ

⊙ ຈິດທີ່ຫໍ່ຫຸ້ມດ້ວຍ　　ສິນາຈາກອະບາຍພູມ
ຈະພາກາຍວົນວາຍ　　ຢູ່ສິງສານນີ້
ຍ້ອນບໍ່ມີປັນຍາຮູ້　　ຫົນທາງພາອອກ
ຈຶ່ງພາກາຍເກືອກກົ້ວ　　ໝົ້ກາມນີ້ຢູ່ດົນ

⊙ ແນວວ່າໄມ້ຂໍ້ຫລໍ້　　ຊິກາຍເກີດເປັນຄຳ
ບໍ່ແມ່ນຫາສິຫາ　　ໂອບເອົາຊິເປັນໄດ້
ຕາມຕຳລາຂຽນໄວ້　　ຫລາຍແສນປີເປັນເຂດ
ໄມ້ຂໍ້ຫລໍ້ທ່ອນນັ້ນ　　ຈຶ່ງເປັນກ້ອນທ່ອນຄຳ

⊙ ສັນໃດ ຈິດທີ່ຢູ່ຝ່າຍກ້ຳ　　ພູມແຫ່ງທຸຄະຕິ
ເບື່ອໜ່າຍພູມຂອງຕົນ　　ຄິດຢາກເອົາຕົວເວັ້ນ
ມີແຕ່ເດີນຕາມເສັ້ນ　　ປັນຍາສິນສະມາທິ
ກ່ອນຈະຫລຸດລອດພົ້ນ　　ລ້ານປີພຸ້ນຈຶ່ງຄ່ອຍເຖິງ

⊙ ຜູ້ໃດສ້າງໂທດໄວ້　　ຖືກເຂົ້າຄຸກຄຸມຂັງ
ຄັນບໍ່ຈຸບກຳນົດ　　ລັກໜີບໍ່ມີໄດ້
ເວັ້ນເສັຽມີແນວຄ້ຳ　　ມາປະກັນຝາກໂທດ
ຄວາມໜັກຈຶ່ງຈະໄດ້　　ຫລຸດຍ້ອນຜ່ອນລົງ

⊙ ຢູ່ອະບາຍພູມກໍຄ້າຍ　　ຄືດັ່ງດຽວກັນ
ຈິດໃດປາຖນາຫວິດ　　ຈາກອະເວຈີນັ້ນ
ຈິດຕ້ອງພາກາຍສ້າງ　　ທຳບຸນຫລາຍໄວ້ພໍເພື່ອ
ຖ້າຖືກຢູ່ກົ້ນໝໍ້　　ພໍຊິໄດ້ຂຶ້ນປາກມັນ

24/VII ຫ້າມຈຳໜ່າຍ

໐ ລາງເທື່ອຈິດຫາກຄິດໄຄ່ໄດ້ ວ່າຢາກເຮັດຄວາມດີ
ກາຍເຫລົ່າມາຫັກຫລັງ ບໍ່ເຮັດຕາມຈິດໄດ້
ອັນນີ້ ມັນເປັນຍ້ອນ ນຳສິຫຸ້ມຫໍ່
ສິຕິດໜາພາສັນດານແກ່ນແລ້ວ ກາຍປີ້ນປ່ຽນບໍ່ທັນ
໐ ຕົວຢ່າງຄົນຜູ່ເຂົ້າ ໄປວັດຈຳສິນ
ສຶກສາທັມຄອງວິໄນ ເຮັດບຸນບໍ່ມີເວັ້ນ
ຂັດລ້າງຈິດຕົນໃຫ້ ບໍຣິສຸດຜຸດຜ່ອງ
ກຳສິນສະມາທິປັນຍາບໍ່ແໜ້ນ ຄວາມເປື້ອນພັດເກີດຄືນ
໐ ບາງເທື່ອສຽງທັມມະເອີ່ຍຂຶ້ນ ເຕືອນບອກໃນທາງດີ
ຈິດອະທັມບໍ່ພໍໃຈ ເກີດເຮຣິນຮ້ອນ
ຟ້າວສັ່ງກາຍສແດງຂຶ້ນ ພຶດຕິການໂຕ້ຕອບ
ຕ້ານທັມມະບໍ່ໃຫ້ ມາເຂົ້າແຊກແຊງ
໐ ຄັນມີສຽງອະທັມຮຽກຮ້ອງ ຊວນສ້າງບາບປາປັງ
ຈິດອະທັມພາກາຍ ເຮັດນຳບໍ່ຂັດຄ້ານ
ສ່ວນຈິດສິນທັມນັ້ນ ຖາມປັນຍາສະມາທິ
ເຫັນເປັນທາງບໍ່ຊອບແລ້ວ ສັ່ງກາຍໄວ້ບໍ່ໃຫ້ທຳ
໐ ກໍຫາກເປັນດັ່ງນີ້ ຈິດທີ່ເຮົາມີ
ສິຫຸ້ມເປັນຕົວການ ຄອບງຳເອົາໄວ້
ກາຍເປັນພໍພຽງແຫລ້ງ ກະທຳຕາມຈິດສັ່ງ
ສິຈິດເປັນຢ່າງໃດ ສິຂອງກາຍກໍດັ່ງນັ້ນ
ຂໍໃຫ້ຣິນຕອງ ແດ່ທ້ອນ. ~

໑໖ - ໑໑ - ໔໐໐໐

# ມາເຢີ ຂວັນເອີຍ

❀ ມື້ນີ້ ນັບວ່າໂຊກສິ່ງຍູ້ ເກີນຄາດຄເນໝາຍ
ໄດ້ມາເຫັນຄົນລາວ ມາກມາຍຫລາຍໜ້າ
ມານັ່ງກັນເປັນຈຸ້ມ ຊຸມແຊວມ່ວນຊື່ນ
ບາງໝູ່ຢືນກັນເປັນກຸ່ມນ້ອຍ ຝອຍເຣື້ອງສູ່ໝູ່ຟັງ
❀ ຄັ້ງແຣກມາພົບພໍ້ ຍໍມືນົບສະບາຍດີ
ຖາມຂ່າວຄາວຄວາມສຸກ ຕໍ່ກັນໂດຍດ້າມ
ຕາມທີ່ເຮົາເຄີຍລົ້ງ ກະທຳມາໄດ້ຫລາຍເຊັ່ນ
ຖືເປັນມາຣະຍາດຊາ້ ປະຈຳເຊື້ອຊາດລາວ
❀ ຜູ່ບ່າວນຸ່ງຮຽບຮ້ອຍ ຕາມຍຸກຕາມສມັຍ
ບາງຄົນໃສ່ກຸຍເຮັງແຂນກະເທີບ ແບບໂບລານເຄົ້າ
ຊຸມຜູ່ສາວນິຍົມສິ້ນ ຕີນໄໝຄຳແພລາຍບ່ຽງ
ມວຍຜົມປັກປີ່ນເກົ້າ ສັງວານກັຽວແຮ່ງຕື່ມງາມ
❀ ຟັງສຽງປາກອ່ອນນ້ອມ ເວົ້າມ່ວນມວນຫູ
ເປັນສຳນຽງສຽງລາວ ຄ່ອຍຈາຈິງຕ້ານ
ຄັນຂານນຳຄົນເຖົ້າ ຜູ່ສັກສິມີກຽດ
ຜູ່ນ້ອຍເຮົາມັກເວົ້າ "ໂດຍຂນ້ອຍ" ຕື່ມນຳ
❀ ທ່າມກາງສຽງຟົດຟື້ນ ສຽງເສບດົນຕຣີ
ເພງລາວເດີມລາວສມັຍ ສິ່ງກະຈາຍດັງກ້ອງ
ມີທັງລຳທັງຮ້ອງ ຕາມທຳນອງທ້ອງຖິ່ນ
ໄດ້ຍິນແລ້ວຢຶກຢ້ອນ ພໍຢາກຟ້ອນເຂົ້າໃສ່ນຳ

⊛ ມີຂອງກັບຂອງແກ້ມ ເຄື່ອງດື່ມຫລາຍຊນິດ
ຕຽມຮັບຝູງມວນມິດ ຜູ້ຮັກແພງມາຢັ້ມ
ເປັນທຳນຽມໄທບ້ານ ໄປຫາມາແວ່ ຕັ້ງແຕ່ພໍ່ແຕ່ແມ່
ເຫັນກັນມັກເຫຍັ້ນເຫລົ້າ ຖາມຂໍ້ຂ່າວຄາວ
⊛ ພາຂວັນຕັ້ງແຕ່ງໄວ້ ຕຽມເພື່ອບາສີ
ມີເພື່ອນຝູງວົງວານ ນັ່ງປນິມມືລ້ອມ
ຊອມເວົ້າຕາມຫລັງເຖົ້າ ໝໍພອນຜູ້ພາສູດ
ຮ້ອງຮຽກຂວັນຂມ່ອມເຈົ້າ ໃຫ້ຄືນເຂົ້າສູ່ຄີງ ວ່າ
"ມາເຢີ ຂວັນເອີຍ"
⊛ ຈາກນັ້ນ ຕ່າງກໍຈັບເສັ້ນຝ້າຍ ໄໝມາດມຸງຄຸນ
ຜູກເອົາພອນຄວາມສຸກ ໃສ່ໃນແຂນເຈົ້າ
ກັບທັງຂວັນແຂງກ້າ ກາຍາທຸກພາກສ່ວນ
ໃຫ້ຫວນຄືນຕ່າວເຂົ້າ ຄີງເຈົ້າຢູ່ສະບາຍ
⊛ ນອກຈາກພວກພີ່ນ້ອງ ເຖົ້າແກ່ຕານາຍ
ມີເພື່ອນຝູງທາງໄກ ຜູ້ຮັກແພງເຮືອນໃກ້
ພາກັນມາໝາຍໝັ້ນ ພິວພັນລື້ງແກວ່ນ ມາຜູກແຂນ
ໃຫ້ຄວາມຮັກແໜ້ນແຟ້ນ ທະວີຂຶ້ນກວ່າແຕ່ຫລັງ
⊛ ແມ່ຄົວຈັດແຈ່ງຫ້າງ ອາຫານແຊບຂອງກິນລາວ
ເຖີງຍາມກິນເຮົາກໍໄປໂຮມກັນ ຮອບວົງພາເຂົ້າ
ຕ່າງກໍຈັບເອົາໄດ້ ໃຜມັນຈານນື່ງ
ປັ້ນເຂົ້າໜຽວຕັກອາຫານໃສ່ຖ້ວຍ ກິນເຂົ້າຮ່ວມກັນ
⊛ ຮັປທານອີ່ມແລ້ວ ຍັງມີພາກບັນເທີງ
ເບິ່ງນາຕສິນຂອງລາວ ແກວ່ງແຂນແພນຢ້ອນ

ຟ້ອນອວຍພອນໄຊໃຫ້ ຄົນມາງານທຸກໆທ່ານ
ນຶກສິ່ງໃດກໍໃຫ້ໄດ້ ໂດຍດ້ານດັ່ງໃຈ
ມີສັງສັນເລັກນ້ອຍ ຫລືວ່າງານບຸນ
ເພື່ອໃຫ້ເປັນມຸງຄຸນ ແກ່ພິທີໃນຄາວນີ້
ຍັງໄດ້ມີການຟ້ອນ ລຳວົງລາວອີກຕໍ່
ພໍເປັນໂອກາດໃຫ້ ທຸກຄົນໄດ້ມ່ວນກັນ
ສິ່ງນຶ່ງພໍຍຶດໝັ້ນ ໃນເຊື້ອຊາດຊາວລາວ ເຮົານັ້ນ
ນອກເຂົ້າໜຽວແລະສຽງແຄນ ກໍແມ່ນລຳວົງນີ້
ວ່າແຕ່ມີບຸນຂຶ້ນ ມີລຳວົງບໍ່ໄດ້ຂາດ
ຊາດອື່ນເຫັນກໍຍົກຍ້ອງ ວ່າລາວຟ້ອນອ່ອນລະໄມ
ຄັນແມ່ນໃຜມັກຟ້ອນ ລຳວົງແບບທຳມະດາ ກໍມີ
ມັກແບບໄທຫລວງພະບາງ ແມ່ນຈັງຫວະຂັບທຸ້ມ
ຫລືຟ້ອນແນວໄທບ້ານ ຕັງຫວາຍແບບຍວກໆ
ຫລືບໍ່ຊັ້ນແບບຈັງຫວະຟ້ອນຊິ່ງ ເຍະຍ້ອນຮ່ອນແອວ
ຖ້າແມ່ນໃຜມັກຟ້ອນ ໄວໆແບບລຳເພີນ ກໍມີ
ມັກແບບລຳຄອນສວັນ ແບບໂຍນໆເຍີ້ນ
ຫລືວ່າໃຜປະສົງຟ້ອນ ສາຣະວັນເຕັ້ຽຕ່າງໆ ກໍເຊີນເດີ
ບ່າວສາວຫລິ້ນມ່ວນແມ້ງ ຈວນແຈ້ງຈຶ່ງຄ່ອຍເຊົາ
ສ່ວນວ່າພວກຜູ້ເຖົ້າ ເດິກແດ່ກໍເມືອນອນ
ມື້ອື່ນ ຢ້ານບໍ່ທັນໄປວັດ ຮັບສິນຍາມເຊົ້າ
ຕັກບາດທຳບຸນໃຫ້ ອະນິສົງນຳສິ່ງ
ຕາງວ່າເປັນເຄື່ອງຢູ້ ຊູຄ້ຳສາສນາ
ສິ່ງເຫລົ່ານີ້ຫາກແມ່ນຮີດແຕ່ເຄົ້າ ຄອງເກົ່າປາງປະຖົມ
ສືບຕໍ່ເຕີມຕາມເຖິງ ຮຸ່ນເຮົາທຸກວັນນີ້

ຈະແມ່ນຕຶກເໜືອໃຕ້ ແດນໄກປະເທດຕ່າງ
ກໍຕາມທ້ອນ
ປະເພນີແບບຢູ່ບ້ານ ຮັກສາໄວ້ບໍ່ໃຫ້ລືມ
ດັ່ງນີ້ ຂ້ອຍຂໍຮ້ອງຮຽກເອີ້ນ ເຊື້ອຊາດຊາວລາວ
ຂ້ອຍເອີຍ
ຈົ່ງຮ່ວມສາມັກຄີຮັກ ຮໍ່ໂຮມຖນອມຕູ້ມ
ເໝືອນດັ່ງເປັນສາຍໄສ້ ອຸທອນດຽວພໍ່ແມ່ ກັນເດີ
ແພງພີງພັນເຜົ່າເຊື້ອ ລາວໄວ້ຢ່າໃຫ້ສູນ
ສາທຸ ຂ້າຂໍນ້ອມນົບໄຫວ້ ເຖິງຄຸນສິ່ງອັນສັກສິດ
ຜູ່ເພິ່ນຫລີງແລຫລຽວ ລໍ່າໂລກາກ້ອງ
ຂໍໃຫ້ມອງໄປຄຸ້ມ ຊຸມຄົນລາວນ້ອຍໃຫຍ່
ຈູງຈິດໃຈນ່ວງນ້າວ ໃຫ້ເປັນກ້ອນແກ່ນດຽວ
ແດ່ທ້ອນ ./.

໔໐ - ๗ - ໙໓

# ມັດຊິມາປະຕິປະທາ
## "ທາງສາຍກາງ"

⊛ ຄົນເຮົາພໍເກີດຂຶ້ນ ມາສູ່ໂລກສິງສານ ເຮົານີ້
ຍ່ອມພົບພານຄວາມທຸກ ດັ່ງດຽວໂດຍດ້ານ
ຕອນເມື່ອຍາມຍັງນ້ອຍ ແດງໆ ເກີດມາໃໝ່
ຄັນເຮັດຫຍັງບໍ່ໄດ້ ມີແຕ່ໄຫ້ຢ່າງດຽວ
⊛ ໄຄແຕ່ຍາມໃຫຍ່ແລ້ວ ຮູ້ຈັກເຮັດເອົາເອງ
ຄັນຢູ່ເຫິງນານມາ ແກ່ຊະຣາເຖິງເຖົ້າ
ຈັກໄປມາຫາແນວເທົ້າ ສາມຂາພາຍ່າງ
ຕາຟາງແຂ້ວວ່ອງວ້ຳ ກິນຫຍໍ້ບໍ່ສະບາຍ
⊛ ແມ່ນວ່າຍາມໜຸ່ມແໜ້ນ ອາຍຸສ່ຳພວມຄະນອງ
ກໍດີທ້ອນ
ເຈັບປ່ວຍເປັນເອັນຈັງ ພະຍາດມີຊ່ຳເຮື້ອ
ເນື້ອໜັງເຄີຍໃສກັຽງ ກໍກາຍເປັນເຫລືອງຫລ່າ
ຄ່ຽນໄປມາແຕ່ລະຄັ້ງ ທັງຊ້ຳຝືດເຄືອງ ທຸກເອີຍ
⊛ ຜູ້ທີ່ສຸຂະພາບໃຫ້ ກ້າມໃຫຍ່ແຂງຂັນ
ທຸກຄອບມີຕັນຫາ ຄວບຄຸມກວມກຸ້ມ
ຊັບສິນສະສົມໄວ້ ມີພຽງພໍໃຊ້ຈ່າຍ
ບໍ່ແຈບໃຈຢ້ານທຸກໄຮ້ ເລີຍຫາເພີ້ມຕື່ມບໍ່ເຊົາ
⊛ ເງິນຄຳໄຫລຫລັ່ງເຂົ້າ ກຽດຕິຍົດມາມີ
ທັງຊື່ສຽງດົງດັງ ຮັ່ງທ່ະວີມີໜ້າ

ທຸກຢ້ານຄົນມາຂ້າ          ທຳລາຍນາບຂູ່
ຢ້ານຕາຍປະເງີນຢູ່ຕູ້    ຫລາຍລ້ານຈ່າຍບໍ່ທັນ ທຸກເດ

ລາງຄົນເປັນທຸກຍ້ອນ          ຍາມເມື່ອບໍ່ສົມຫວັງ
ລາງຄົນທຸກຍ້ອນຄົນເຄີຍຮັກ          ໜ່າຍແໜງໜີໜ້າ
ລາງຄົນທຸກຄອບກາຍາຮ້າຍ          ໂສມຊົງຮູບບໍ່ຫລໍ່
ລາງຄົນທຸກຄອບເປັນໜໍ່ເຊື້ອ          ຊິນຊັ້ນຮາດສະດອນ

ລາງຄົນເປັນທຸກຍ້ອນ          ເຫັນຄົນອື່ນເຂົາມີ
ຄິດບຣຸດບຣູນອິດສາ          ໂກດເຄືອງບໍ່ມີແລ້ວ
ຊອກແຕ່ແນວປັກປຳ          ໃຈດຳຫັຣມໂຫດ
ໂຫດກັມເພິ່ນບົ່ງໄວ້          ບໍ່ກົວຢ້ານຢ່ອນຂາມ

ຍາມເມື່ອອອກປາກຕ້ານ          ຂານວ່າຈານຳ
ກໍຫາກມີຄຳເຄັມ          ສຣຸດສີຫຍັບເຍີ້ຍ
ຈົນວ່າຄົນເຄີຍຮູ້          ຫລຽວເຫັນແໜງໜ່າຍ
ບໍ່ກ້າກາຍມໍ່ໃກ້          ກົວຄວາມເວົ້າທັ່ງແທງ

ບາງຄົນເປັນທຸກຍ້ອນ          ການກິເລດຕັນຫາ
ຄິດລ່ວງເກີນປະເພນີ          ຮີດຄຸນຄອງເຄົ້າ
ລູກເມັຽເຂົາຫວງຫ້າມ          ລວນລາມກັຽວກອດ
ຮອດມື້ເຂົາຄຸບໄດ້          ກັມຊິກັຽວກອດຄືນ

ລາງຄົນໃຈໂລບລັຽວ          ຄິດຢາກຮັ່ງຍາມດຽວ
ຍ້ອນວ່າຕົນເຄີຍທຸກ          ຍາກມາຫລາຍແລ້ວ
ຄ້າຂາຍແນວຫວງຫ້າມ          ຜິດກົດໝາຍຂອງເຖື່ອນ
ເຈົ້າໜ້າທີ່ສືບພົ້          ດຶງຄໍເຂົ້າໃສ່ຕະລາງ

ບາງຄົນທຸກຍ້ອນຄ້ານ          ມາຄອບຄອງໃຈ
ແມ່ນຈະທຳການໃດ          ບໍ່ໄຄ່ປົງຈິດຕັ້ງ

ບໍ່ຈິງໃຈໝັກແໜ້ນ ດຸດັນຟັນຜ່າ
ຄອງຖ້າບຸນຊ່ວຍຄໍ້າ ໂຕຊໍ້າບໍ່ເຮັດຫຍັງ

⊛ ລາງຄົນເປັນທຸກຍ້ອນ ຕິດຝິ່ນກິນສຸຣາ
ພໍເມື່ອມຶນເມົາມາ ກໍເກີດເປັນໂຈນຮ້າຍ
ຊື່ວ່າຫາຍເຫີຍເຫລົ້າ ຈຶ່ງມາຫວນເຫັນໂທດ
ຄວາມດີເຄີຍໄດ້ສ້າງ ເພມ້າງມຸ່ນທະລາຍ

⊛ ລາງຄົນເປັນທຸກຍ້ອນ ຈິດວິ່ໃຈວອນ
ຫ່ວງຊັບສິນດິນດອນ ວຽກງານການຄ້າ
ຫ່ວງລູກຫລານເຫລັນຫລ້າ ຫລາຍອັນພັນຢ່າງ
ນັ່ງສງົບບໍ່ໄດ້ ໃຈປັ້ນເລື່ອນລອຍ

⊛ ອັນນີ້ ພຣະຕົວຢ່າງເລັກນ້ອຍ ໃນຈໍາພວກຄວາມທຸກ
ຫລາຍຄົນຄົງເຄີຍຄົບ ຂື່ນຂົມມາແລ້ວ
ໃຜຜູ່ປອງປະລິງພົ້ນ ອະບາຍພູມທີ່ໄດ້ກ່າວມານີ້
ພຣະໂຄດົມເພິ່ນບອກຊີ້ ທາງໃຫ້ໄຕ່ຕາມ

⊛ ທາງເສັ້ນນີ້ ຊື່ວ່າ "ສາຍກາງ"
ເປັນທາງໜີຄວາມທຸກ ຍາກໃຈໝອງໄໝ້
ຍັງເປັນທາງພາໃຫ້ ເຖິງນິພານແດນປະເສີດ
ບ່ອນຄວາມສຸກເລີດແທ້ ມິໃຫ້ຄືບຂັ້ນ

⊛ ກ່ອນຈະກ້າວຮອດຂັ້ນ ທາງແຫ່ງສຸຄະຕິ ວ່ານັ້ນ
ແປດຂໍ້ຄວນພຣນຮຣມ ພໍ່າເພັ້ງໃຫ້ຈິນໄດ້
ເອົາ **ປັນຍາ** ເປັນແສງໄຕ້ ເອົາ **ສິນ** ເປັນຂອບເຂດ
ເອົາ **ສະມາທິ** ເປັນທີ່ຈັ້ງ ຍາມເຂົ້າສູ່ຄອງ

⊛ ໑ ກ່ອນອື່ນໃຫ້ຮັບຮູ້ "ເຫັນຊອບ" ໃນຄວາມທຸກ
ສາເຫດຄື **ຕັນຫາ** ທຸກຈຶ່ງມີມາໄດ້

ຮູ້ ເຫດ-ຜົນ ຈະແຈ້ງ ດັບຕັນຫາ ແມ່ນ ດັບທຸກ
ເບື່ອໜ່າຍຄວາມທຸກນີ້ ຈຶ່ງປອງເວັ້ນຫລີກໄກ

❀ ໒ ໃນເມື່ອເຫັນຊອບແລ້ວ ກໍໃຫ້ເລີ່ມ "ດຳຣິ"
ໄດ້ແກ່ການຜິປອງ ອອກຈາກການອັນໝອງເສົ້າ
ຄືກຳຈັດຄວາມແຄ້ນ ໂກທາພະຍາບາດ
ຢ່າໃຫ້ເຫລືອຢູ່ຄ້າງ ສັນດານນັ້ນ ອີກເລີຍ

❀ ໓ ຄັນດຳຣິຊອບແລ້ວ ກໍຈຶ່ງຄ່ອຍປະຕິບັດ
ເລີ້ມແຕ່ "**ການວາຈາ**" ໃຫ້ຄິດນຳທຸກຄຳເວົ້າ
ເວົ້າຫຼາຍຫຼືຕິວະຕົ້ມ ຄຳຂິມແລະຄຳຫຍາບ ໃຫ້ເວັ້ນ
ເອົາແຕ່ຄວາມອ່ອນນ້ອມ ມາເວົ້າຕໍ່ກັນ

❀ ໔ ຄັນວາຈາຊອບແລ້ວ ໃຫ້ຄິດເບິ່ງ "**ການກະທຳ**"
ປະພຶດຜິດໃນກາມ ລັກເລັ່ນເຂັ່ນຂ້າ
ຢ່າໃຫ້ມາມີໄດ້ ໃນສັນດານເດັດຂາດ
ເຮັດແຕ່ແນວຖືກຕ້ອງ ຄອງບ້ານເພິ່ນນິຍົມ

❀ ໕ ເມື່ອກະທຳຊອບແລ້ວ "**ການລ້ຽງຊີບ**" ກໍຄວນຄິດ
ໃຫ້ຫລີກແນວທຸຈະຣິດ ບາບກັມຊິນຳຕ້ອງ
ຄ້າຂອງແນວເຂັ່ນຂ້າ ອຸປກອນແນວໃຫ້ໂທດ ເຊົາເດີ
ຫາລ້ຽງຊີບແຕ່ໃນທາງບໍ່ເດືອດຮ້ອນ ເຄືອງແຄ້ນ
ທ່ານຜູ້ໃດ

❀ ໖ ເລືອກອາຊີບຊອບແລ້ວ ໃຫ້ປະກອບ "**ຄວາມພຽນ**"
ພຽນລະແນວອັບປີ ທີ່ຈະພາໝອງມົ້ວ
ພຽນສ້າງຄວາມດີຂຶ້ນ ໃຫ້ມີຫລາຍກວ່າຄວາມຊົ່ວ
ພຽນຮັກສາຄວາມດີທີ່ເຄີຍໄດ້ກໍ່ສ້າງ ມານັ້ນຢ່າໃຫ້ສູນ

⊛ ໗ ພຣົບໃນທາງຊອບແລ້ວ ໃຫ້ "**ສຳນຶກ**" ໃນຕົວເອງ
ວ່າຕົນເອງເປັນໃຜ ເຮັດຫຍັງຢູ່ດຽວນີ້
ມີສະຕິໝາຍມຸ້ງ ໃນທາງດີໜີທາງຊົ່ວ
ສຳນຶກຕົວຮອບດ້ານ ໂດຍບໍ່ເວັ້ນເລືອກສະຖານ

⊛ ໘ ຄັນສຳນຶກຊອບແລ້ວ ໃຫ້ໝັ່ນນັ່ງ "**ສະມາທິ**"
ຕັ້ງຕໍ່ຄວາມສງົບຈິດ ຂົ່ມໃຈເອົາໄວ້
ຢ່າໃຫ້ຫງຸດຫງິດງ້ວງ ຜັນແປຟຸ້ງຊ່ານ
"**ບັນລຸຊານ**" ຈຶ່ງຈະໄດ້ ໂດຍດ້ານດັ່ງໝາຍ

ນີ້ຄືທັມແປດຂໍ້ ທີ່ຄວນແກ່ປະຕິບັດ
ຜູ່ຢາກໜີໃຫ້ຫວິດທຸກ ຈົ່ງເລືອກທາງສາຍນີ້
ອົງພຣະອໍຣະຫັນເຈົ້າ ໄປນິພານພົ້ນທຸກ
ກໍຍ້ອນຕາມໄຕ່ເສັ້ນ ທາງນີ້ຈຶ່ງຄ່ອຍເຖິງ ທ່ານເອີຍ.

໑໗ - ໕ - ໗໒

24/7vn
ຫ້າມຈຳໜ່າຍ

# ມຸງຄຸນຊີວິດ ໓໘

໑. ຢ່າຄົບຄົນພານ ໒. ຈົ່ງສມານບັນດິດ
໓. ຄິດໃຫ້ຖ້ວນຖີ່ໃນການບູຊາ ໔. ສແວງຫາບ່ອນສງົບ
໕. ໃຫ້ປະຈົບເພື່ອສ້າງວາສນາ ໖. ສຸມປັນຍາໃນທາງຊອບ
໗. ໝັ່ນປະກອບການສຶກສາ ໘. ພຽນຊອກຫາສິລປະ
໙. ບໍ່ລົດລະຄອງວິໄນ ໑໐. ໃຊ້ວາຈາສຸພາບຮອບຄອບ
໑໑. ຮູ້ຈັກຕອບຄຸນບິດາມານດາ
໑໒. ພຽນອິດສາລ້ຽງລູກເຕົ້າ ໑໓. ເຝົ້າຮັກຄູ່ສເນຫາ
໑໔. ມີວຽກມາຢ່າໃຫ້ຄ້າງ ໑໕. ໃຫ້ໝັ່ນສ້າງບຸນທຳທານ
໑໖. ປະສານທັມມະເພື່ອລະຄວາມບຽດບຽນ
໑໗. ພຽນຊ່ວຍເຫລືອຍາດພີ່ນ້ອງ ໑໘. ອາຊີບຕ້ອງ
ໄຮ້ໂທດໂທສາ ໑໙. ແນວບາບໝາຍຢ່າກະທຳ
໒໐. ນຳມຶນເມົາໃຫ້ຫລີກຫ່າງ ໒໑. ຢ່າຊ່າງປມາດຄອງ
ທັມໂມ ໒໒. ສ້າງໃຫ້ໄຕເປັນທີ່ເຄົາຣົບນົບນ້ອມ
໒໓. ຈົ່ງພຽບພ້ອມເພື່ອຖ່ອມຕົນ ໒໔. ເປັນຄົນຜູ້ມີສັນ
ໂດດພໍປະມານ ໒໕. ຖືການກະຕັນຍູເປັນພິເສດ
໒໖. ໝັ່ນຟັງເທດແລະຟັງທັມ ໒໗. ຄວາມອົດທົນຖື
ເປັນໃຫຍ່ ໒໘. ເປັນຄົນສອນງ່າຍແລະຟັງຄວາມ
໒໙. ຊອບຄົບສົມນະພາມ, ນັກບວດ ໓໐. ໝັ່ນເຂົ້າວັດ
ສົນທະນາທັມ ໓໑. ບຳເພັນເຜົາກິເລດປາປັງຫຸ້ມຫໍ່
໓໒. ຕັ້ງຕໍ່ເຮັດໃຈບໍຣິສຸດເພື່ອພົມຈັນ ໓໓. ຖືສຳຄັນ
ແມ່ນອະຣິຍະສັດສີ່ ໓໔. ມີຄວາມຮູ້ແຈ້ງໃນນິພານ

໓໕. ຈິດບໍ່ສະທ້ານໄຫວຫວັ່ນ ໓໖. ບໍ່ດິ້ນດັ່ນເສົ້າໂສກາ
໓໗. ບໍ່ເຝືອນຫາຄວາມກຳນັດ ໓໘. ເພັ່ງເລັ່ງລັດໃຫ້ຈິດ
ກະເສີມສຳລານ...

ບັນດາຂໍ້ພຸທຄາຖາ ໃຜອິດສາປະຕິບັດໄດ້
ໄປພາຍໜ້າ ຊິພາໃຫ້ຮຸ່ງເຮືອງ ແທ້ແລ້ວ

໑໒ ໐໑ - ໒໐໐໐

# ມຸງຄຸນຊີວິດ

ຕື່ນທຸກເຊົ້າ ມາອະທິຖານ
ວ່າຄືນພານ ຂໍຢ່າໃຫ້ພົບ
ຂໍໃຫ້ຄົບ ຄົນມີສິນທັມ
ຄວາມໂສມົມ ໃນໃຈຂໍລ້າງ
ຂໍເສີມສ້າງ ໃສ່ແຕ່ຄວາມດີ
ທີ່ເປັນຄຸນ ແກ່ຕົນແລະໝູ່
ຜູ່ເພິ່ນຮູ້ ຂໍໃຫ້ເພິ່ນສອນ
ຕອນເຮັດຜິດ ຂໍໃຫ້ເພິ່ນບອກ

# ມານຊີວິດ

ເກີດເປັນນີ້ ບໍ່ມີຈຸດໝາຍ
ໃຈວຸ້ນວາຍ ຊອກຫາສ້າງເຣື້ອງ
ບໍ່ໄດ້ເຕື້ອງ ທັມມະທັມໂມ
ຄວາມໂສມົມ ໃນໃຈບໍ່ລ້າງ
ບໍ່ເສີມສ້າງ ຄຸນງາມຄວາມດີ
ທີ່ເປັນຄຸນ ແກ່ຕົນແລະໝູ່
ໂຕບໍ່ຮູ້ ບໍ່ໃຫ້ເພິ່ນສອນ
ຕອນເຮັດຜິດ ບໍ່ໃຫ້ເພິ່ນບອກ

ຄວາມໂສມົມ ຄື ຄວາມໂລພາ, ໂທສາ, ໂກທາ, ພຍາບາດ, ປມາດຄຸນທີ່ມີຕໍ່, ຍໍຕົນຈົນເກີນຄອງ, ປອງອິດສາ, ພະຍາຂີ້ຖີ່, ມີເລ່ມານຍາ, ຫາໂອ້ອວດ, ຊວດລວດດີ້, ຖືຕົວ, ມົວເມົາ, ເວົ້າດູໝິ່ນ, ຍິນແຂ່ງດີ, ມີໃຈປມາດ

# ທົສຣາຊທັມ

ທານຄົນໄຮ້ ອະນາຖາທຸຂມອດ
ຂອດເອົາສິບຫ້າຂໍ້ ປະຈໍາໄວ້ໃສ່ໃຈ
ບໍຣິຈາກໃຫ້ ເປັນປໂຍດມວນມະນຸດ
ທັງມີໃຈບໍຣິສຸດ ທ່ຽງທັມນໍາພ້ອມ
ຮູ້ຖ່ອມຕົນຕົວນ້ອມ ດອມຊຸນຮຸ່ນກ່ອນ
ລົດຜ່ອນຄວາມຄິດຕື້ນ ໃຈສັ້ນຄຽດໄວ
ໃຫ້ລະຄວາມໂຫດຮ້າຍ ພຍາບາດອິດສາ
ເຮັດຫຍັງກໍ່ໃຫ້ມີໃຈອົດ ພາກພຽນຈົນແລ້ວ
ແນວບໍ່ດີບໍ່ຄວນເວົ້າ ອໍາພາງຕົວະລ່າຍ
ບໍ່ລ່ວງກາຍຮີດເຄົ້າ ຄອງບ້ານບ່ອນເຊົາ.

# ພໍ່ແມ່ກະຕັນຍູ

ພໍ່ແມ່ພຣົມພ່ຳລັຽງ ລູກຮັກສຸດຫົວໃຈ
ຫ້າມເຮັດແນວເສັຽຫາຍ ກຽດຕະກຸນແຊງເຊື້ອ
ຕັກເຕືອນຕາມຄອງແກ້ວ ອົງພຸດໄທສອນສັ່ງ
ທັງຍັງໄດ້ລ້ຽງເຂົ້າ ຮຽນຮູ້ສາຕສິນ
ບອກປະເພດຜັຽນ ເນື້ອຄູ່ຄວນຄອງ
ມອບຊັບສິນເງິນທອງ ມີ່ງມູນມັງໃຫ້
ເຖົ້າໃດທຳສັນນີ້ ກະຕັນຍູຍອດຍິ່ງ
ຄອງພຣະເພິ່ນທຽບໄວ້ ທຽມເທົ້າພຣະພຣົມ ພຸ້ນແລ້ວ.

# ລູກກະຕະເວທີ

ລູກໃດໄດ່ຄິດພໍ້ ຄຸນພໍ່ແມ່ຂອງຕົນ
ແລ້ວຕອບແທນບຸນຄຸນ ທີ່ເພິ່ນພຣົມຖນອມລ້ຽງ
ຊວ້ານຊ່ວຍຊູສອງເຖົ້າ ຍາມຊະລາແຮງອ່ອນ
ທັງຕັ້ງໜ້າສືບສ້າງ ຕະກຸນໃຫ້ວັທນາ
ປະພຶດສົມດັ່ງໄດ້ ເປັນຜູ່ສືບມໍຣະດົກ
ພໍເພິ່ນໝົດບຸນໄປ ແຈກທານເຖິງເລື້ອຍ
ລູກໃດທຳສັນນີ້ ກະຕະເວທີເປັນຊື່
ຄອງພຣະວ່າລູກແກ້ວ ຄູນຄ້ຳເກີດນຳ ນັ້ນແລ້ວ.

# ຄູ່ຊີວິດ

ຄູ່ຜານ: ໃຈໂຫດຮ້າຍ ປ້ອຍດ່າວິນວາຍ
ຄັນບໍ່ລືມອາຣົມໝາຍ ທຸບທໍາລາຍຖິ້ມ

ຄູ່ໃຈນ: ເງິນຄໍາປ້ອມ ໄປທາງອັປໂຍດ
ຂາຍມູນມັງບໍ່ແລ້ວ ຊໍ້າເປັນໜີ້ທົ່ວເມືອງ

ຄູ່ນາຍ: ມັກອວດອ້າງ ກຽດຕິຍົດຂອງຕົນ
ປຽບຄູ່ຄອງເປັນຄົນ ໜວກໜາປັນຍາປູ້

ຄູ່ອ້າຍ: ໃຈຫ່ວງຫ້ອຍ ນໍາຄູ່ສເນຫາ
ວຽກງານໃດໜັກໜາ ຊ່ວຍຊອນຊູຊວ້ານ

ຄູ່ນ້ອງ: ຄິດມໍ່ຕື້ນ ຄຽດງ່າຍຫູເບົາ
ບໍ່ໄດ້ລືມໃຈມັກ ຈົ່ມຈາບໍ່ມີແລ້ວ

ຄູ່ໃຈ: ຕ່າງຖືກຂໍ້ ຊີມຊອບນິສັຍກັນ
ຕ່າງຊ່າງຄອຍເອົາໃຈ ຊື່ງກັນແລະກັນໄດ້

ຄູ່ກັນ: ວ່າຄູ່ກັນກ່ອນກີ້ ນໍາຈ່ອງຈູງມາ
ຕ່າງກໍຈໍາໃຈທົນ ຮັບຜົນທີ່ຕົນສ້າງ.

# ສັງຄົມ

ເຮັດນຳສັງຄົມ ຄັນບໍ່ມີສັດທາດ້ວຍ ກໍເປັນການບັງຄັບ
ມີສັດທາ ຄັນບໍ່ເສັຽສລະໃຫ້ໄດ້ ປານໄປຄ້າບໍ່ອອກທຶນ
ມີສລະ ຄັນບໍ່ມີສັດທາພ້ອມ ໄວ້ວາງໃຈກັນຍາກ
ມີສັດຈະ ຄັນບໍ່ສົນທະນາປາກເວົ້າ ບັນຫາແກ້ຢ່າງໃດ
ມີສົນທະນາ ຄັນບໍ່ມີອະພັຍໃຫ້ ຜິດຖຽງກັນຊິແຕກແຍກ
ມີອະພັຍ ບໍ່ມີກຽດໃຫ້ຍົກຍ້ອງ ເຮັດດີໄດ້ ບໍ່ວ່າດີ.

ສັງຄົມໃດຫາກມຸ້ງ ເຮັດດັ່ງແນວທາງວ່ານີ້
ຄວາມຮັກແພງແລະຄວາມສຸກ ບໍ່ເກີດໃນສັງຄົມນັ້ນ

ເຮັດນຳສັງຄົມ ຄັນມີສັດທາດ້ວຍ ແມ່ນພໍໃຈສມັກຮ່ວມ
ມີສັດທາ ແລ້ວເສັຽສລະໃຫ້ໄດ້ ປານໄປຄ້າພ້ອມອອກທຶນ
ມີສລະແລ້ວ ມີສັດຈະແຈ້ງ ແມ່ນຈິງໃຈຕໍ່ໝູ່ຄູ່
ມີສັດຈະແລ້ວມີສົນທະນາປາກເວົ້າ ບັນຫາແກ້ຮ່ວມກັນ
ມີສົນທະນາແລ້ວຍັງມີອະພັຍໃຫ້ ຜິດກັນມາພໍຍົກໂທດ
ມີອະພັຍແລ້ວຮູ້ໃຫ້ກຽດຍົກຍ້ອງ ເຮັດດີໄດ້ຍິ່ງສິ່ງເສີມ

ສັງຄົມໃດເຮັດໄດ້ ໂດຍດັ່ງແນວທາງ ວ່ານີ້
ຄວາມຮັກແພງແລະຄວາມສຸກ ຊິເກີດໃນສັງຄົມນັ້ນ.

໒໙ - ໐໒ - ໐໑

# ຄວາມຮັກແພງ

(ຈະປູກຄວາມຮັກແພງ)

ຄັນເອົາສັງຄົມ ເປັນບ່ອນກ້າ ເບັ້ຽແກ່ນອັນເຮົາມັກ
ໃຫ້ເອົາສັດທາ ເປັນຈຳນວນແກ່ນ ທີ່ເຮົາລົງກ້າ
ແລ້ວເອົາເສັຽສລະ ເປັນນ້ຳ ຫົດລົງໃຫ້ຊຸ່ມຊື່ນ
ເອົາສັດຈະ ເປັນອາຫານ ຫລໍ່ລ້ຽງບຳລຸງເບັ້ຽໃຫ້ເຕີມໂຕ
ເອົາສິນທະນາ ໄວ້ເສັຽຫຍ້າ ຂ້າຫຸ່ນບົວຣະບັດ
ເອົາການອະພັຍ ເປັນຢາໃສ່ແຜແລະແມງໄມ້
ເອົາການໃຫ້ກຽດ ເປັນປຸຍແປ້ງ ຫົດໂຮຍເຮັດຝຸ່ນ
ເອົາຄວາມອົດທົນ ເປັນຮົ້ວລ້ອມ ລົມຕ້ອງບໍ່ໃຫ້ເພ
ເອົາໝັ່ນພຽນ ເປັນແສງແດດ ສ່ອງໃຫ້ຕື່ນງ່າງາມຕາ
ເອົາມ່ວນຊື່ນ ເປັນມາລາ ກິ່ນຫອມທີ່ໝາຍໝັ້ນ
ເອົາການພົບປະ ເປັນຍາມກູ້ ເກັບຜົນທີ່ປູກຫວ່ານ
ເອົາຄວາມສຸກໃຈ ເປັນກຳໄຣ ແບ່ງໃຫ້ທຸກຄົນໄດ້ຊື່ນຊົມ
ສັງຄົມໃດເຮັດໄດ້ ໂດຍດັ່ງກະຕິກາ ວ່ານີ້
ຄວາມຮັກແພງຈະຍືນຍົງ ຢູ່ໃນສັງຄົມນັ້ນ.

໐໗ - ໐໓ - ໐໑

# ກໍອູ - ມໍອຶງ

⊙ ແມ່ນໃຜພາກໍເຮື່ອງ ໃຫ້ຫຍຸ້ງຍາກສັບສົນ
ຄັນພໍໃຈນໍາອັນໃດ ຜູກພັນຕິດໝັ້ນ
ຄັນບໍ່ພໍໃຈດ້ວຍ ໂວຍວາຍຮ້າຍກາດ
ບາດຜິດຫວັງນັ່ງເສົ້າ ເຫງົາງ້ວງທຸກຣະທົມ
⊙ ຖືກທັກຫລັງຫລືຖືກຕົ້ມ ປອງອາຄາດທໍາລາຍ
ພົບພໍ້ແນວອັນຕຣາຍ ສັ່ນສາຍກົວຢ້ານ
ເຫັນແກ່ຕົວກໍສຸດຫັ້ນ ຫຶງຫວງທັງຂີ້ຖີ່
ມີຄົນຍ້ອງຍົວະເຍົ້າ ຄູຍໂມ້ອວດໂຕ
⊙ ຜູ່ກໍ່ເຮື່ອງເຫລົ່ານີ້ ກໍໄດ້ແກ່ຕົວ "ກູ"
ຄູ່ແຂ່ງກູກໍຄື "ມຶງ" ເກັ່ງສເມີກັນນີ້
ຄັນມີ ກູ-ມຶງ ຂຶ້ນ ສນາມໃດກໍຕາມຊ່າງ
ບ່ອນນັ້ນຕ້ອງແຕກມ້າງ ເພພັງມຸ່ນທະລາຍ
⊙ ບ່ອນໃດຫາກຜ່ອນໄດ້ ຄໍາວ່າ ມຶງ - ກູ
ຄວາມຜິດຖຽງວິນວາຍ ຈະຄ່ອຍຄາຍລົງໄດ້
ຄວາມສາມັກຄີຈະດີຂຶ້ນ ຄວາມປອງດອງຈະຊ້ອຍຊື່ນ
ຄວາມຮັກແພງຈະຄ່ອຍກ້າວ ຈເຣີນໄດ້ດັ່ງໃຈ
⊙ ອໍຣະຫັນເພິ່ນເຮັດໄດ້ ດັບ "ກູ" ອອກຈາກຈິດໃຈ
ເພິ່ນວ່າ "ກູ" ນັ້ນ ເປັນໄລເກາະ ກິເລດຕັນຫາໄວ້
ເມື່ອດັບ "ກູ" ເສັດສິ້ນ ຈິດໃຈຈະຜຸດຜ່ອງ
ເພາະກິເລດບໍ່ມີບ່ອນຂ້ອງ ໃຈໄດ້ອີກເລີຍ.

໒໐ - ໐໓ ໐໒

# ສິ່ງທ້າຍປີເກົ່າ

ໃນວາຣະສິ່ງທ້າຍ ປີເກົ່າຊິລາໜີ
ຂໍບັນດາຄວາມບໍ່ດີ ໝົ່ນໝອງອອກໄປພ້ອມ
ເຊັ່ນຫວັດໄອໜາວໄຂ້ ໂຣຄາໂພຍພຍາດ
ເຈັບປວດຈຸກສຽບແໜ້ນ ວິນປັ້ນສັ່ນເຊັ່ນ
ຄວາມອາຄາດຄຽດແຄ້ນ ພຍາບາດອິດສາ
ຄວາມຂື່ນຂົມທຶ່ງຫວງ ຈ່ອງເວນປອງຮ້າຍ
ຄວາມສຽດສີຫຍັນເຍີ້ຍ ກຸກກວນນາບຂູ່
ຄວາມສັບສົ່ນເຣື້ອງ ນິນທາໂອ້ອວດສະຫາວ
ຄວາມຫງ່ວມເຫງົາໂສກເສົ້າ ກັນເກົ່າປາງຫລັງ
ຄວາມອັບປີຈັງໄຣ ເຄາະເຂັນເວນຫ້ອຍ
ສັດຕຣູມານຜານລ້າງ ຣາຫູມັດຈຸຣາດ
ຄວາມອັບປາງໂຊກຮ້າຍ ຊວຍເຈັ້ງຈຽບຈົມ
ສິ່ງເຫລົ່ານີ້ ເປັນເຫດແຫ່ງຄວາມທຸກ
ທ່ານຢ່າໄປພານພົບ ອີກເດີປີໜ້າ
ຊົ່ມຣິສມັນມາແລ້ວ ທໍຣະມານຫລາຍໂພດ
ປີເກົ່າເອີຍ ຫຸບຫອບສັພທຸກນີ້ ໄປພ້ອມແດ່ເດີ.

24 / VII
ຫ້າມຈຳໜ່າຍ

# ພອນປີໃໝ່

ເນື່ອງໃນໂອກາດຂຶ້ນ ປີໃໝ່ວຽນມາ
ຂ້ອຍຂໍວິງວອນຫາ ເທພດາຢູ່ເທິງຟ້າ
ຜູ້ມີຫູຕາແກ້ວ ສໍຣະຍານໃສສ່ອງ
ຄອຍຄຸ້ມຄອງລ່ຳຍັຽມ ຊົມພູພື້ນໂລກຄົນ
ປະສາດພອນຍອດແກ້ວ ແນວປະເສີດມຸງຄຸນ
ອັນຈະນຳຄວາມສຸກ ເບີກບານມາໃຫ້
ປີນີ້ແມ່ນຈະລົງມືສ້າງ ກິຈການແນວຊອບ ທັນແລ້ວ
ຂໍໃຫ້ບັນລຸໄດ້ ໂດຍດ້ານດັ່ງໝາຍ
ແມ່ນຈະຫລິ້ນເລກທ້າຍ ຫວຍສລາກຊນິດໃດ
ໃຫ້ໂຊກໝານຈົນເປັນ ເສດຖີເງິນລ້ານ
ຄູ່ຜົວເມັຽໃຫ້ຍືນໝັ້ນ ຮັກແພງກັນຂຶ້ນຍິ່ງໆ
ຄົບໝູ່ຄູ່ກໍໃຫ້ພົ້ ແຕ່ຄົນຜູ້ຖືກນິໄສ
ແນວໃດຜິດພາດພັ້ງ ໃນປີເກົ່າອະໂຫສິ
ປີໃໝ່ເອົາໃຈໃໝ່ມາຄືນດີ ຮັກກັນດັ່ງຄາວກີ້
ມີເຫື່ອແຮງແຂງກ້າ ຜົວພັນຜຸດຜ່ອງ
ປີເດືອນລ້ຳລ່ວງຍ້າຍ ໃຫ້ງາມນິ້ມ ຢູ່ສເນີ
ແມ່ນວ່າເຈັບນັ້ນໆ ນີ້ໆ ໃນປີເກົ່າກາຍມາ
ຂໍໃຫ້ເຫັຍຫາຍສ່ຳ ສວ່າງເຊົາເບົາຂຶ້ນ
ປີໃໝ່ມາເຖິງແລ້ວ ຂໍອິນພຣົມຍິນມະຣາດ
ປະສາດພອນເຫລົ່ານີ້ ໃຫ້ສົມແມ້ງປາຖນາ ທ່ານເນີ.